ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ກະຊວງແຜນການ ແລະ ການລົງທຶນ

ອົງການຮ່ວມມືສາກົນຍີ່ປຸ່ນ
(ໄຈກາ)

**ການຮ່ວມມືທາງດ້ານເຕັກນິກຂອງອົງການໄຈກາ (JICA)**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງໂຄງການການລົງທຶນລັດ**
**( ພີແຄັບ2)**

# ບົດລາຍງານປະຈຳປີ
# ສຳລັບປີທີ 3

ເດືອນສິງຫາ, 2010

ໄອຊີເນັດ ( IC NET ) ຈຳກັດ

## ໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງແຜນງານການລົງທຶນລັດ (PCAP2)
## ບົດລາຍງານປະຈຳປີ ສຳລັບປີທີ 3

### ສາລະບານ


ສາລະບານ ........ i

ຄຳສັບຫຍໍ້ ........ 1

1. ໂຄງຮ່າງຂອງໂຄງການ ........ 2
   1.1. ສະພາບຂອງໂຄງການໂດຍລວມ ........ 2
   1.2 ໂຄງຮ່າງຂອງບົດລາຍງານ. ........ 2

2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ແລະການບັນລຸຜົນຂອງບັນດາໝາກຜົນ .. 4
   2.1 ກອງປະຊຸມຄະນະກຳມະການປະສານງານຮ່ວມ ........ 5
   2.2 [ໝາກຜົນທີ 3] ບັນດາກິດຈະກຳໃນການໃຫ້ຄຳປຶກສາກ່ຽວກັບກົດໝາຍການຄຸ້ມຄອງການ ລົງທຶນລັດ ........ 7
   2.3 [ໝາກຜົນທີ 1] ບັນດາກິດຈະກຳກ່ຽວກັບການສ້າງທັກສະ(ການຝຶກອົບ/ການຝຶກອົບຮົມໜ້າວຽກ) ........ 9
   2.4 [ໝາກຜົນທີ 2] ກິດຈະກຳສຳລັບການຄູ້ມຄອງ ແລະ ທາງດ້ານງົບປະມານ ແລະ ການເງິນ ........ 15
   2.5 [ ໝາກຜົນທີ 4 ] ກິດຈະກຳສຳລັບການປັບປຸງວິທີການຄຸ້ມຄອງການລົງທຶນລັດ. ........ 17

3. ຄວາມຄືບໜ້າໃນການບັນລຸຈຸດປະສົງຂອງໂຄງການ. ........ 29

4. ຜົນກະທົບ. ........ 31

5. ຂໍ້ຄົງຄ້າງ ........ 32

6. ຂໍ້ມູນການເດີນທາງຂອງຊ່ຽວຊານ ໄຈກາ ........ 32

7. ອຸປະກອນທີ່ຊື້ມາໃຊ້ໃນໂຄງການ ........ 33


**ເອກະສານຊ້ອນທ້າຍ:**

"ຄູ່ມືສຳລັບ ການຄຸ້ມຄອງໂຄງການ ໃນແຜນງານການລົງທຶນລັດ"

(ຄັດຕິດໜ້າປົກ ແລະ ສາລະບານ)

## ຄໍາສັບຫຍໍ້

| | |
|---|---|
| DOF | ພະແນກການເງິນແຂວງ |
| DPI | ພະແນກແຜນການແລະການລົງທຶນແຂວງ |
| GPAR | ການປະຕິຮູບການປົກຄອງ ແລະການບໍລິຫານລັດ |
| JCC | ຄະນະປະສານງານຮ່ວມ |
| JICA | ອົງການຮ່ວມມືສາກົນໄຈກາ |
| MPI | ກະຊວງແຜນການແລະການລົງທຶນ |
| MPI-DIC | ການຮ່ວມມືສາກົນ, ກະຊວງແຜນການແລະການລົງທຶນ |
| MPI-DOE | ກົມປະເມີນຜົນ, ກະຊວງແຜນການແລະການລົງທຶນ |
| MPI-DOP | ກົມແຜນການ, ກະຊວງແຜນການແລະການລົງທຶນ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ |
| ODA | ທຶນຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການ. |
| OJT | ການຝຶກອົບຮົມໜ້າວຽກ |
| PCAP | ໂຄງການສ້າງຄວາມສາມາດໃນການຄຸ້ມຄອງແຜນງານການລົງທຶນລັດ |
| PCAP2 | ໂຄງການເສີມສ້າງຄວາມສາມາດໃນການຄຸ້ມຄອງແຜນງານການລົງທຶນລັດ |
| PIP | ແຜນງານການລົງທຶນລັດ |
| PO | ເຈົ້າຂອງໂຄງການ |
| SOP | ຂັ້ນຕອນມາດຕະການການດໍາເນີນງານ |
| SPAS | ການປະເມີນແບບຂາດໂຕ(ແບບດ່ຽວ) |
| UNDP | ອົງການສະຫະປະຊາຊາດເພື່ອການພັດທະນາ |

## 1. ໂຄງຮ່າງຂອງໂຄງການ

### 1.1. ສະພາບຂອງໂຄງການໂດຍລວມ

ລັດຖະບານລາວມີຈຸດມຸ້ງໝາຍເພື່ອຢາກພັດທະນາ ແລະ ນໍາວິທີການຄຸ້ມຄອງ ການລົງທຶນລັດ (PIP) ເຊິ່ງເປັນຂົງເຂດໜຶ່ງທີ່ສໍາຄັນທີ່ສຸດທີ່ຕ້ອງການການປັບປຸງ. ວິທີການຄຸ້ມຄອງດັ່ງກ່າວປະກອບມີການປະເມີນ, ການຈັດຕັ້ງປະຕິບັດ ແລະການປະເມີນຜົນ. ອີງຕາມການຮ້ອງຂໍ ຂອງ ລັດຖະບານລາວ (GOL) ໄປຍັງລັດຖະບານຍີ່ປຸ່ນ (GOJ), ອົງການຮ່ວມມືສາກົນ ຍີ່ປຸ່ນ (JICA) ໄດ້ຈັດຕັ້ງການຮ່ວມມືທາງດ້ານເຕັກນິກພາຍໃຕ້ໂຄງການທີ່ເອີ້ນວ່າ: ໂຄງການ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງໂຄງການການລົງທຶນລັດ (PCAP) ເລີ່ມຈາກເດືອນທັນວາ 2004 ຫາ ເດືອນຕຸລາ 2007 ເຊິ່ງມີຈຸດປະສົງ ເພື່ອພັດທະນາບັນດາວິທີການ ຄຸ້ມຄອງໂຄງການ ການລົງທຶນລັດ (PIP) ແລະ ສ້າງຄວາມສາມາດຂອງພະນັກງານທີ່ກ່ຽວຂ້ອງ. ໂຄງການ (PCAP) ໄດ້ສໍາເລັດລົງໃນເດືອນຕຸລາ 2007 ຕາມກໍານົດເວລາ. ແຕ່ລັດຖະບານລາວ ຮຽກຮ້ອງໃຫ້ສືບຕໍ່ການສະໜັບສະໜູນ.

ດ້ວຍເຫດນີ້ຈຶ່ງໄດ້ມີການຕົກລົງ ຈັດຕັ້ງໂຄງການເສີມສ້າງຄວາມສາມາດ ໃນການຄຸ້ມຄອງໂຄງການລົງທຶນລັດ (PCAP2) (ຈາກນີ້ໄປໃຊ້ຄໍາວ່າ "ໂຄງການ") ເຊິ່ງເປັນໂຄງການຮ່ວມມືທາງ ດ້ານເຕັກນິກໂຄງການໜຶ່ງຂອງອົງການໄຈກາ (JICA) ທີ່ສືບຕໍ່ປັບປຸງວິທີການ ແລະຂັ້ນຕອນການ ຄຸ້ມຄອງ PIP ແລະເຜີຍແຜ່ວິທີການ ແລະເຄື່ອງມືເຫຼົ່ານີ້ໂດຍ ຜ່ານອົງການຈັດຕັ້ງລັດຖະບານລະດັບຊາດ ແລະທ້ອງຖິ່ນ. ນອກນັ້ນ, ໂຄງການຍັງມີຈຸດມຸ້ງໝາຍ ເພື່ອຮັບປະກັນວ່າກະຊວງແຜນການ ແລະ ການລົງທຶນ (MPI) ຈະເປັນຜູ້ມີບົດບາດໃນການນໍາພາ ບໍາລຸງຮັກສາ ແລະ ຍົກລະດັບຄວາມສາມາດໃນການຄຸ້ມຄອງ PIP ໃນທົ່ວປະເທດ, ໂຄງການດັ່ງກ່າວເລີ່ມຕົ້ນໃນເດືອນ ມີນາ 2008 ແລະຄາດວ່າຈະສໍາເລັດໂຄງການໃນເດືອນສິງຫາ 2011.

### 1.2 ໂຄງຮ່າງຂອງບົດລາຍງານ.

ບົດລາຍງານສະບັບນີ້ສະແດງໃຫ້ເຫັນເຖິງ ການບັນລຸຜົນສໍາເລັດຂອງ ໂຄງການຈາກມື້ເລີ່ມຕົ້ນໂຄງການ (ເດືອນມີນາ 2008) ຈົນເຖິງປະຈຸບັນ (ເດືອນສິງຫາ 2010) ໂດຍແນໃສ່ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດບັນດາກິດຈະກໍາໃນ 5 ເດືອນທີ່ຜ່ານມາ ຈາກເດືອນກຸມພາ ເຖິງ ເດືອນສິງຫາ 2010 . ຕາຕະລາງຂ້າງລຸ່ມນີ້ແມ່ນສະຫຼຸບຫຍໍ້ຂອງບົດລາຍງານ.

| 1. ໂຄງຮ່າງຂອງໂຄງການ |
|---|
| ໂຄງຮ່າງຂອງໂຄງການ ແລະ ບົດສະຫຼຸບຂອງບົດລາຍງານນີ້ຖືກນໍາສະເໜີ |

### 2.1 ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການແລະການບັນລຸໝາກຜົນ

ການຈັດຕັ້ງປະຕິບັດກິດຈະກຳເພື່ອໃຫ້ບັນລຸໝາກຜົນທັງ 4 ຂອງໂຄງການແມ່ນດຳເນີນໄປຢ່າງສະດວກ ແລະ ຄາດວ່າທຸກໆໝາກຜົນຈະບັນລຸຄາດໝາຍໃນເວລາທີ່ໂຄງການສິ້ນສຸດ. ຂ້າງລຸ່ມນີ້ແມ່ນກິດຈະກຳທີ່ຖືກຈັດຕັ້ງປະຕິບັດໃນຊ່ວງເວລານີ້:

- ປຶ້ມກົດໝາຍວ່າດ້ວຍການລົງລັດທີ່ອະນຸມັດໃນເດືອນທັນວາ 2009 ໄດ້ຖືກຈັດພິມ ແລະ ກຽມ ພ້ອມທີ່ຈະແຈກຢາຍ.
- ດຳລັດການຈັດຕັ້ງປະຕິບັດກົດໝາຍການລົງທຶນລັດແມ່ນຍັງຢູ່ໃນຂັ້ນຕອນການສ້າງ
- ການຝຶກອົບຮົມທົ່ວປະເທດ ກ່ຽວກັບການຄຸ້ມຄອງການລົງທຶນລັດແມ່ນ ໄດ້ຖືກຈັດຂຶ້ນຢູ່ໃນ 18 ແຫ່ງ ຈາກເດືອນພະຈິກ 2009 ຫາເດືອນກຸມພາ 2010 ເຊິ່ງມີພະນັກງານເຂົ້າຮ່ວມທັງໝົດ 862 ທ່ານ.
- ການຝຶກອົບຮົມໜ້າວຽກ (OJT) ແມ່ນໄດ້ຖືກຈັດຂຶ້ນຢູ່ 25 ແຫ່ງຈາກເດືອນກຸມພາຫາເດືອນມີນາ 2010 ເພື່ອສະໜັບສະໜູນຂັ້ນຕອນການຍື່ນສະເໜີຂໍງົບປະມານປະຈຳປີ ແລະສະໜັບສະໜູນທາງດ້ານເຕັກນິກ.
- ແຜນການຝຶກອົບຮົມທົ່ວປະເທດ ຄັ້ງຕໍ່ໄປແມ່ນສຳເລັດແລ້ວ ລວມທັງການກະກຽມຫຼັກສູດສະເພາະ ແລະ ບັນດາອຸປະກອນການຝຶກອົບຮົມ. ການຝຶກອົບຮົມໃຫ້ຄູຝຶກພາຍໃນກະຊວງແຜນການ ແລະການລົງທຶນ (ຜທ) ແມ່ນຖືກຈັດຂຶ້ນ ໃນເດືອນສິງຫາ 2010.
- ມີການປັບປຸງເພີ່ມເຕີມ ກ່ຽວກັບວິທີການຈັດສັນງົບປະມານ ແລະ ການຄຸ້ມຄອງທາງດ້ານການເງິນຂອງໂຄງການ ໂດຍຜ່ານການສຶກສາຜົນຂອງການຝຶກອົບຮົມ ແລະ ການສັງເກດການຈາກການດຳເນີນງານຕົວຈິງ. ພວກມັນໄດ້ສະແດງອອກໃນຄູ່ມືການຄຸ້ມຄອງໂຄງການ (ຄູ່ມືລວມ) ແລະບັນດາປຶ້ມ ຄູ່ມືສະເພາະອື່ນໆ
- ການດຳເນີນ ແລະວິທີການຄຸ້ມຄອງທຶນສົມທົບກັບໂຄງການຊ່ວຍເຫຼືອຈາກຕ່າງປະເທດ (ODA) ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ ແລະ ການຄຸ້ມຄອງແຜນງານໄດ້ຖືກປັບປຸງ ໂດຍອີງຕາມການວິເຄາະຈາກການຝຶກອົບຮົມ ແລະຂັ້ນຕອນຍື່ນສະເໜີງົບປະມານປະຈຳປີຕົວຈິງຄັ້ງທີ່ ຜ່ານມາ.

### 2.2 ສິ່ງສຳຄັນໃນການຈັດຕັ້ງປະຕິບັດບັນດາກິດຈະກຳໃນປີທີ 4

ສິ່ງທີ່ຄວນເອົາໃຈໃສ່ໃນເວລາຈັດຕັ້ງປະຕິບັດກິດຈະກຳສຳລັບປີທີ 4 ເລີ່ມແຕ່ເດືອນຕຸລາ 2010 ຫາເດືອນສິງຫາ 2011 ມີດັ່ງລຸ່ມນີ້:

- ປຶ້ມນ້ອຍກ່ຽວກັບກົດໝາຍວ່າດ້ວຍການລົງທຶນລັດຈະໄດ້ຖືກແຈກຢາຍໄປທົ່ວປະເທດ ພ້ອມກັບປຶ້ມຄູ່ມືການຄຸ້ມຄອງໂຄງການ.
- ໂຄງການຈະໄດ້ສືບຕໍ່ສະໜັບສະໜູນກະຊວງແຜນການແລະການລົງທຶນ ໃນການສ້າງດຳລັດການຈັດຕັ້ງປະຕິບັດ ແລະ ຮັບປະກັນວ່າດຳລັດດັ່ງກ່າວຈະກວມບັນດາອົງປະກອບທາງດ້ານເຕັກນິກ.
- ການຝຶກອົບຮົມຄັ້ງໜ້າຈະແມ່ນໂອກາດສຸດທ້າຍຂອງໂຄງການ PCAP2 ເຊິ່ງບັນດາພະນັກງານພະແນກແຜນການ ແລະ ການລົງທຶນ/ກົມແຜນການ ກະຊວງຈະຖືກຝຶກໃຫ້ກາຍເປັນຄູຝຶກທີ່ໄດ້ຄຸນນະພາບ.
- ການສຳມະນາກ່ຽວກັບການຈັດສັນງົບປະມານ/ການຄຸ້ມຄອງດ້ານການເງິນ ຈະຖືກຈັດຂຶ້ນໃນ ເດືອນ ພະຈິກ 2010 ບົດແນະນຳສຳລັບກະກຽມການຍື່ນສະເໜີຂໍງົບປະມານຂັ້ນແຂວງຈະໄດ້ຖືກ ຮ່າງຂຶ້ນໃນມື້ສຳມະນາ.
- ຍັງມີຕ້ອງການຫຼາຍໃນການເສີມສ້າງທັກສະ ໃນທາງປະຕິບັດກ່ຽວກັບການຄຸ້ມຄອງ PIP ໂດຍສະເພາະແມ່ນທາງດ້ານການຄຸ້ມຄອງທຶນສົມທົບຕໍ່ກັບໂຄງການ ODA, ການຄຸ້ມຄອງໂຄງການລົງ ທຶນລັດຂັ້ນ

| |
|---|
| ເມືອງ ແລະ ການຄຸ້ມຄອງແຜນງານ.<br>- ການປະສານສົມທົບກັບຄູ່ຮ່ວມພັດທະນາອື່ນໆ ແມ່ນເປັນສິ່ງຈຳເປັນໃນການຄຸ້ມຄອງທຶນສົມ ທົບ ຕໍ່ກັບໂຄງການ ODA ເຊັ່ນດຽວກັນກັບການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ. |
| 3. ຄວາມຄືບໜ້າໃນການບັນລຸຈຸດປະສົງຂອງໂຄງການ |
| ເຖິງແມ່ນວ່າໝາກຜົນຂອງໂຄງການຈະກຳລັງດຳເນີນໄປຢ່າງລາບລື່ນໃນການບັນລຸຄາດໝາຍ, ແຕ່ການບັນລຸເຖິງບັນດາໂຕຊີ້ວັດຂອງຈຸດປະສົງໂຄງການແມ່ນຂຶ້ນກັບການຈັດຕັ້ງປະຕິບັດຂອງ ການຄຸ້ມຄອງໂດຍກະຊວງ ຜທ ແລະ ພະແນກແຜນການ ແລະ ການລົງທຶນແຂວງ ກໍ່ຄືພະນັກງານ ທີ່ກ່ຽວຂ້ອງໃນການຄຸ້ມຄອງແຜນງານການລົງທຶນລັດໂດຍລວມໃນໄລຍະເວລາການສະເໜີຂໍງົບ ປະມານການລົງທຶນລັດສົກປີ 2011-12. ດັ່ງນັ້ນ, ການບັນລຸຈຸດປະສົງຂອງໂຄງການ ບໍ່ສາມາດຮັບປະກັນໄດ້ຈົນກ່ວາຈະໄດ້ມີການຕິດຕາມກວດກາຂັ້ນຕອນການສະເໜີງົບປະມານດັ່ງກ່າວ. |
| 4. ຜົນກະທົບ |
| ການບັນລຸເປົ້າໝາຍລວມແມ່ນຍາກທີ່ຈະກຳນົດເຖິງຄວາມຄືບໜ້າໃນຊ່ວງເວລານີ້ |
| 5. ປະເດັນທີ່ຄົງຄ້າງ |
| ການໄປຝຶກອົບຮົມທີ່ປະເທດທີສາມແມ່ນ ບໍ່ໄດ້ຈັດໃນປີນີ້ ເນື່ອງຈາກການຈັດຕາຕະລາງຂອງອົງການຈັດຕັ້ງເຈົ້າພາບຢູ່ປະເທດມາເລເຊຍບໍ່ຕົງກັນ |

## 2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ແລະການບັນລຸຜົນຂອງບັນດາໝາກຜົນ

ໂຄງການໄດ້ສຳເລັດບັນດາກິດຈະກຳສຳລັບປີທີ 3 ແລະມີຄວາມໜ້າດີ ເປັນໄປຕາມແຜນ. ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນບັນດາກິດຈະກຳທີ່ໄດ້ຈັດຕັ້ງປະຕິບັດໃນ 5 ເດືອນຜ່ານມາ ແຕ່ເດືອນ ກຸມພາຫາເດືອນ ສິງຫາ 2010.

| ລາຍການ | ກິດຈະກຳແຕ່ເດືອນກຸມພາຫາເດືອນສິງຫາ 2010 |
|---|---|
| ກອງປະຊຸມປະສານງານຮ່ວມ(JCC) | ➢ ກອງປະຊຸມຄະນະປະສານງານຮ່ວມ(JCC) ຈັດຂຶ້ນໃນເດືອນເມສາ 2010<br>➢ ກອງປະຊຸມ JCC ຈັດຂຶ້ນໃນເດືອນສິງຫາ 2010. |
| [ໝາກຜົນທີ 3] ດ້ານໃຫ້ຄຳປຶກສາໃນການຮ່າງ ກົດໝາຍວ່າດ້ວຍການລົງທຶນລັດ. | ➢ ກະກຽມການເຜີຍແຜ່ກົດໝາຍ<br>➢ ສະໜັບສະໜູນການສ້າງ ດຳລັດການຈັດຕັ້ງປະຕິບັດ. |
| [ໝາກຜົນທີ 1] ການຝຶກອົບຮົມແລະການຝຶກ ອົບຮົມໜ້າວຽກ. | ➢ ຈັດຝຶກອົບຮົມສຳລັບບັນດາແຂວງ ແລະກະຊວງ<br>➢ ຈັດຝຶກອົບຮົມໜ້າວຽກ ຢູ່ກະຊວງ ຜທ ,ບັນ ດາແຂວງ ແລະກະຊວງ.<br>➢ ປະເມີນຜົນການຝຶກອົບຮົມແລະປະເມີນຜົນ ຂອງການປະເມີນ.<br>➢ ຜົນຕອບຮັບຕາມຜົນຂອງການຝຶກອົບຮົມໜ້າ ວຽກ |

| | |
|---|---|
| | ➢ ການພັດທະນາຫຼັກສູດການຝຶດອົບຮົມ<br>➢ ການຝຶກອົບຮົມໃຫ້ຄູຝຶກ (TOT)<br>➢ ການປຶກສາຫາລືກ່ຽວກັບການຝຶກອົບຮົມໃຫ້ເປັນລະບົບສະຖາບັນ |
| [ໝາກຜົນທີ 2] ງົບປະມານການລົງທຶນລັດ ແລະການຄຸ້ມຄອງທາງດ້ານການເງິນ | ➢ ການປັບປຸງງົບປະມານການລົງທຶນລັດ ແລະວິທີການຄຸ້ມຄອງທາງດ້ານການເງິນຂອງໂຄງການ |
| [ໝາກຜົນທີ 4] ວິທີການປັບປຸງການຄຸ້ມຄອງແຜນງານການລົງທຶນລັດ | |
| [ໝາກຜົນ 4.1]ການຄຸ້ມຄອງທຶນສົມທົບຕໍ່ກັບໂຄງການ ODA | ➢ ເຮັດໃຫ້ບັນດາຂັ້ນຕອນ,ເຄື່ອງມືແລະການຝຶກອົບຮົມແຂງແກ່ນຂຶ້ນ |
| [ໝາກຜົນທີ 4.2]ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ | ➢ ປັບປຸງວິທີການ,ເຄື່ອງມືແລະຜົນສະທ້ອນຂອງການນຳໃຊ້ ໃນຄູ່ມືຕ່າງໆ. |
| [ໝາກຜົນທີ 4.3]ການຄຸ້ມຄອງແຜນງານ | ➢ ຊ່ວຍກະຊວງ ຜທ ໃນການພັດທະນາຫຼັກສູດ ແລະອຸປະກອນການຝຶກອົບຮົມ. |

### 2.1 ກອງປະຊຸມຄະນະກຳມະການປະສານງານຮ່ວມ

ກອງປະຊຸມຄະນະກຳມະການປະສານງານຮ່ວມ (JCC)ໄດ້ຖືກຈັດຂຶ້ນ 2 ຄັ້ງ ໃນຊ່ວງເວລານີ້ ວາລະກອງປະຊຸມໄດ້ຖືກປຶກສາຫາລືຕາມລຳດັບ. ເນື່ອງຈາກບົດລາຍງານລະບົບນີ້ຖືກຍື່ນກ່ອນກອງປະຊຸມ JCC ຄັ້ງທີ່ 5 ດັ່ງນັ້ນ ໃນບົດລາຍງານສະບັບນີ້ຈະໄດ້ກ່າວເຖິງພຽງແຕ່ຫົວຂໍ້ສົນທະນາທີ່ໄດ້ວາງແບບໄວ້.

### 1) ກອງປະຊຸມ JCC ຄັ້ງທີ 4

| ວັນທີ | ວັນພຸດ,ທີ 31 ເດືອນ ມີນາ 2010 |
|---|---|
| ຜູ້ເຂົ້າຮ່ວມ | ລວມທັງໝົດ 41 ທ່ານ ລວມທັງບັນດາຜູ້ມີລາຍຊື່ດັ່ງລຸ່ມນີ້<br>➢ ທ່ານ ດຣ. ບຸນທະວີ ສີສຸພັນທອງ ລັດຖະມົນຕີຊ່ວຍວ່າກະຊວງ ຜທ ແລະຜູ້ອຳນວຍການໂຄງການ.<br>➢ ທ່ານ ມາຊາໂຕ ໂທກາວາ ຜູ້ຕາງໜ້າອົງການ ໄຈກາ ປະຈຳລາວ<br>➢ ທ່ານ ວິໄຊ ຊາວັນນາ ຫົວໜ້າກົມປະເມີນຜົນ ກະຊວງ ຜທ ແລະຮອງບໍລິຫານໂຄງການ.<br>➢ ທ່ານ ອຸ່ນເຮືອນ ຈິດຕະພົງສ໌ ຮອງຫົວໜ້າກົມແຜນການ ກະຊວງ ຜທ ແລະຮອງບໍລິຫານໂຄງການ.<br>➢ ທ່ານ ນາງ ສາຍໝອນຄຳ ມັງໜໍ່ເມກ ຮອງຫົວໜ້າກົມຮ່ວມມືສາກົນ ກະຊວງຜທ |

| | |
|---|---|
| | ➢ ທ່ານ ສີລີສົມພອນ ຫຼວງສຸວັນນະວົງ ຮອງຫົວໜ້າກົມງົບປະມານ ກະຊວງການເງິນ<br>➢ ພະນັກງານຈາກກະຊວງການເງິນ<br>➢ ພະນັກງານຈາກຫ້ອງການ ໄຈກາ ປະຈຳລາວ<br>➢ ພະນັກງານຈາກກົມປະເມີນຜົນ,ກົມແຜນການ,ກົມຮ່ວມມືສາກົນ<br>➢ ບັນດາຊ່ຽວຊານແລະພະນັກງານຈາກໂຄງການ ພີແຄບ 2 (PCAP2) |
| ເນື້ອໃນ | ➢ ໂຄງຮ່າງກ່ຽວກັບກົດໝາຍວ່າດ້ວຍການລົງທຶນລັດ<br>➢ ຜົນຂອງການຝຶກອົບຮົມຄັ້ງທີ 2 ກ່ຽວກັບການຄຸ້ມຄອງການລົງທຶນລັດ ແລະການ ຝຶກອົບຮົມໜ້າວຽກ(OJT)<br>➢ ຜົນຂອງການຝຶກອົບຮົມກ່ຽວກັບການຄຸ້ມຄອງທາງດ້ານການເງິນ<br>➢ ການພັດທະນາວິທີການຄຸ້ມຄອງທຶນສົມທົບຕໍ່ໂຄງການ ODA<br>➢ ຜົນຂອງການຕີລາຄາໄລຍະກາງໂດຍອົງການໄຈກາ |
| | ➢ ໃນຄະນະທີ່ມີການແລກປ່ຽນຜົນສຳເລັດຂອງການປະກາດນຳໃຊ້ກົດໝາຍວ່າ ດ້ວຍການລົງທຶນລັດ ມັນສະແດງໃຫ້ເຫັນເຖິງການຮ່ວມມືກັນແລະພະຍາຍາມຂອງກະຊວງ ຜທ ແລະໂຄງການ PCAP 2 ໃນການເຜີຍແຜ່ແລະນຳໃຊ້ກົດໝາຍ ດັ່ງກ່າວ.<br>➢ ຄວາມສຳຄັນຂອງການຄຸ້ມຄອງທາງດ້ານການເງິນກໍ່ໄດ້ຖືກຍົກຂຶ້ນ ເປັນປະເດັນ ແລະກະຊວງຜທໄດ້ພິຈາລະນານຳໃຊ້ເຄື່ອງມືໃນການຄຸ້ມຄອງທາງດ້ານການເງິນ ໃນການເຈລະຈາທາງດ້ານງົບປະມານກັບບັນດາແຂວງໃນສົກປີທີ່ຈະມາເຖິງນີ້.<br>➢ ທັງກະຊວງ ຜທ ແລະອົງການ ໄຈກາ ໄດ້ສະແດງຄວາມຊົມເຊີຍໃນຜົນສຳເລັດ ໃນການຈັດຕັ້ງປະຕິບັດ ການຝຶກອົບຮົມທົ່ວປະເທດກ່ຽວກັບການຄຸ້ມຄອງການລົງ ທຶນລັດ. |

## 2) ກອງປະຊຸມ JCC ຄັ້ງທີ 5

| | |
|---|---|
| ວັນທີ | ວັນອັງຄານ ທີ 24 ສິງຫາ 2010 |
| ຜູ້ເຂົ້າຮ່ວມ | ບັນດາທ່ານທີ່ມີລາຍຊື່ດັ່ງລຸ່ມນີ້ຄາດວ່າຈະເຂົ້າຮ່ວມກອງປະຊຸມ<br>➢ ທ່ານ ດຣ. ບຸນທະວີ ສີສຸພັນທອງ ຮອງລັດຖະມົນຕີກະຊວງ ຜທ ແລະຜູ້ອຳນວຍ ການໂຄງການ.<br>➢ ທ່ານ ມາຊາໂຕ ໄທກາວາ ຜູ້ຕາງໜ້າອົງການ ໄຈກາ ປະຈຳລາວ<br>➢ ທ່ານ ບຸນປອນ ສີສຸລາດ ຫົວໜ້າກົມປະເມີນຜົນ ກະຊວງ ຜທ ແລະຜູ້ບໍລິຫານໂຄງການ<br>➢ ທ່ານ ອຸ່ນເຮືອນ ຈິດຕະພົງສ໌ ຮອງຫົວໜ້າກົມແຜນການ ກະຊວງ ຜທ ແລະຮອງບໍລິຫານໂຄງການ.<br>➢ ທ່ານ ທຸມພັນ ຊຸກປະສິດ ຮອງຫົວໜ້າກົມຮ່ວມມືສາກົນ<br>➢ ຜູ້ຕາງໜ້າຈາກສະຖານທູດຍີ່ປຸ່ນ<br>➢ ຜູ້ຕາງໜ້າຈາກກະຊວງການເງິນ<br>➢ ພະນັກງານຈາກຫ້ອງການ ໄຈກາ ປະຈຳລາວ |

| | |
|---|---|
| | ➢ ພະນັກງານຈາກກົມປະເມີນຜົນ,ກົມແຜນການ,ກົມຮ່ວມມືສາກົນ ກະຊວງຜທ<br>➢ ບັນດາຊ່ຽວຊານ ແລະພະນັກງານຈາກໂຄງການ PCAP 2 |
| ເນື້ອໃນ | ➢ ຜົນຂອງບັນດາກິດຈະກຳ ສຳລັບປີທີ 3<br>✧ ຜົນຂອງການປະເມີນຜົນຂອງການປະເມີນສຳລັບການປະເມີນໂຄງການ ປີ 2010<br>✧ ສະເໜີບັນດາປຶ້ມຄູ່ມືລວມ ແລະບັນດາປຶ້ມຄູ່ມືສະເພາະຫົວໃໝ່<br>✧ ຄວາມຄືບໜ້າຂອງການຮ່າງດຳລັດການຈັດຕັ້ງປະຕິບັດ<br>➢ ແຜນຂອງກິດຈະກຳສຳລັບປີ ທີ 4<br>✧ ແຜນການຝຶກອົບຮົມທົ່ວປະເທດ<br>✧ ບັນດາໝາກຜົນສຸດທ້າຍຂອງໂຄງການ PCAP 2<br>➢ ການນຳສະເໜີບາດກ້າວຕໍ່ໄປໃນການພັດທະນາການຄຸ້ມຄອງການລົງທຶນ |

## 2.2 [ໝາກຜົນທີ 3] ບັນດາກິດຈະກຳໃນການໃຫ້ຄຳປຶກສາກ່ຽວກັບກົດໝາຍການຄຸ້ມຄອງການລົງທຶນລັດ

### (1) ຄາດໝາຍໃນການບັນລຸໝາກຜົນທີ 3

ໝາກຜົນທີ 3 ມີຄວາມຄືບໜ້າດີ ແລະຄາດວ່າຈະບັນລຸຄາດໝາຍ ພາຍໃນເວລາທີ່ໂຄງການສິ້ນສຸດ. ກົດໝາຍວ່າດ້ວຍການລົງທຶນລັດແມ່ນ ໄດ້ຖືກຮັບຮອງຢ່າງເປັນທາງການໃນ ເດືອນທັນວາ ປີ 2009. ປຶ້ມນ້ອຍກ່ຽວກັບກົດໝາຍແມ່ນໄດ້ຖືກຈັດພິມ ແລະພ້ອມທີ່ຈະແຈກຢາຍໃຫ້ບັນດາຖັນແຖວ ພະນັກງານທີ່ກ່ຽວຂ້ອງໃນການຄຸ້ມຄອງການລົງທຶນລັດທົ່ວປະເທດ. ກົດໝາຍດັ່ງກ່າວກໍ່ໄດ້ຖືກບັນຈຸຢູ່ໃນປຶ້ມຄູ່ມືການຄຸ້ມຄອງໂຄງການລົງທຶນລັດ.

ດຳລັດການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວແມ່ນກຳລັງຢູ່ໃນຂະບວນການສ້າງ ແລະຍັງຕ້ອງການຄຳແນະນຳ ແລະ ການດັດປັບຕື່ມອີກໃນກອງປະຊຸມລັດຖະບານ. ການດັດປັບກໍ່ແມ່ນປະເດັນໃໝ່ອີກປະເດັນໜຶ່ງທີ່ບັນດາປຶ້ມຄູ່ມືຕ້ອງມີການດັດປັບ ເພື່ອຫຼີກລ້ຽງບໍ່ໃຫ້ເກີດການຂັດກັນ (ບໍ່ເຂົ້າກັນ) ລະຫວ່າງປຶ້ມຄູ່ມື ແລະກົດໝາຍ.

| |
|---|
| [ໝາກຜົນທີ 3]<br><u>ກອບກົດໝາຍຂອງຄວາມມີປະສິດທິພາບແລະປະສິດທິຜົນໃນການຄຸ້ມຄອງການລົງທຶນລັດແມ່ນໄດ້ຖືກພັດທະນາຂຶ້ນຢ່າງແຂງແກ່ນ</u><br>[ໂຕຊີ້ວັດ]<br>1. ກົດໝາຍວ່າດ້ວຍການລົງທຶນ ແລະ ດຳລັດທີ່ກ່ຽວຂ້ອງສະເພາະໄດ້ຖືກຮ່າງ, ຍື່ນ ແລະອະນຸມັດຈາກສະພາແຫ່ງຊາດ.<br>2. ກົດໝາຍວ່າດ້ວຍການລົງທຶນລັດ ແລະດຳລັດທີ່ກ່ຽວຂ້ອງສະເພາະໄດ້ກຳນົດອີງການຈັດຕັ້ງທີ່ |

| |
|---|
| ຮັບຜິດຊອບ ແລະ ຂັ້ນຕອນທີ່ຖືກຕ້ອງຕາມກົດໝາຍໃນການທົດສອບ, ປຸ່ງນແປງ, ຢຸດເຊົາຊົ່ວຄາວ ແລະຖາວອນຂອງບັນດາໂຄງການ ລວມທັງໂຄງການ ODA ແລະ ປັບໃໝອົງການຈັດຕັ້ງທີ່ກ່ຽວຂ້ອງ. ອະນຸຍາດໃຫ້ບັນດາປື້ມຄູ່ມື ເຊິ່ງຖືກພັດທະນາ ແລະ ຍົກລະດັບຂຶ້ນໃນໂຄງການເປັນເຄື່ອງມືມາດຖານໃນການຄຸ້ມຄອງການລົງທຶນລັດ ແລະ ຖືກເຜີຍແຜ່ໄປທົ່ວປະເທດ. |

**(2) ທົບທວນການຈັດຕັ້ງປະຕິບັດ.**

ບັນດາກິດຈະກຳເພື່ອບັນລຸເປົ້າໝາຍແມ່ນ ກຳລັງມີຄວາມຄືບໜ້າໄປຕາມແຜນ. ບັນດາກິດຈະກຳທີ່ວາງໄວ້ພ້ອມກັບຄວາມຄືບໜ້າຕ່າງໆໃນການບັນລຸໝາກຜົນດັ່ງກ່າວ ແມ່ນໄດ້ສະແດງຢູ່ໃນຕາຕະລາງລຸ່ມນີ້:

<u>ຕາຕະລາງທີ 1 ກິດຈະກຳສຳລັບໝາກຜົນທີ 3</u>

| ກິດຈະກຳຕາມແຜນ | ການບັນລຸຜົນ |
|---|---|
| 1) ໃຫ້ຄຳປຶກສາກ່ຽວ ກັບການຮ່າງກົດໝາຍ ວ່າດ້ວຍການລົງທຶນ | [ສຳເລັດ]ທາງໂຄງການໄດ້ໃຫ້ຄຳປຶກສາທາງດ້ານເຕັກນິກໃນການດຳເນີນການຮ່າງກົດໝາຍ. ກົດໝາຍດັ່ງກ່າວໄດ້ຮັບການອະນຸມັດຈາກສະ ພາແຫ່ງຊາດໃນເດືອນພະຈິກ 2009 ແລະປະກາດນຳໃຊ້ໃນເດືອນທັນວາ 2009 |
| 2)ໃຫ້ຄຳປຶກສາກ່ຽວກັບການອອກດຳລັດ/ ລະບຽບ | [ກຳລັງຈັດຕັ້ງປະຕິບັດ]ໂຄງການກຳລັງໃຫ້ຄຳປຶກສາທາງດ້ານເຕັກນິກ ກ່ຽວກັບການດຳເນີນການຮ່າງດຳລັດການຈັດຕັ້ງປະຕິບັດ |
| 3)ຕິດຕາມກວດກາຜົນບັງຄັບໃຊ້ກົດໝາຍການລົງທຶນລັດ | [ກຳລັງຈັດຕັ້ງປະຕິບັດ]ໂຄງການໄດ້ແນະນຳກ່ຽວກັບກົດໝາຍວ່າດ້ວຍ ການລົງທຶນລັດໃນການຈັດສຳມະນາທົ່ວປະເທດ. ໂຄງການຈະໄດ້ສືບ ຕໍ່ແນະນຳກົດໝາຍຢູ່ໃນຈັດສຳມະນາ ແລະ ຝຶກອົບຮົມທົ່ວປະເທດ ແລະ ກໍ່ຈະຕິດຕາມກວດກາຜົນບັງຄັບໃຊ້ກົດໝາຍດັ່ງກ່າວ. |

**✻ ກິດຈະກຳທີ່ໄດ້ຖືກຈັດຕັ້ງປະຕິບັດແຕ່ ເດືອນກຸມພາ-ຫາ ເດືອນສິງຫາ 2010 ມີດັ່ງລຸ່ມນີ້:**

**1) ກະກຽມເຜີຍແຜ່ກົດໝາຍ**

ພາຍຫຼັງກົດໝາຍໄດ້ຖືກປະກາດນຳໃຊ້ຢ່າງເປັນທາງການ, ປຶ້ມນ້ອຍກ່ຽວກັບກົດໝາຍດັ່ງກ່າວໄດ້ຖືກຈັດພິມສຳລັບການກະກຽມເພື່ອແຈກຢາຍໃຫ້ແກ່ບັນດາຖັນແຖວພະນັກງານທີ່ກ່ຽວຂ້ອງໃນການຄຸ້ມຄອງການລົງທຶນລັດໃນທົ່ວປະເທດ. ກົດໝາຍດັ່ງກ່າວກໍ່ຍັງໄດ້ຖືກບັນຈຸປຶ້ມຄູ່ມືການຄຸ້ມຄອງໂຄງການໆລົງທຶນລັດ. ດັ່ງນັ້ນ, ຜູ້ທີ່ນຳໃຊ້ສາມາດສັງເກດເຫັນກອບກົດໝາຍກໍ່ຄືວິທີການບັງຄັງໃຊຂອງມັນ.

**2) ສະໜັບສະໜູນການຮ່າງດຳລັດການຈັດຕັ້ງປະຕິບັດ.**

ດຳລັດການຈັດຕັ້ງປະຕິບັດແມ່ນຢູ່ໃນຂັ້ນຕອນຮ່າງ ດຳລັດການຈັດຕັ້ງປະຕິບັດແມ່ນຕິດພັນຢ່າງສະໜິດແໜ້ນກັບຂັ້ນຕອນ ແລະ ວິທີການສະເພາະທີ່ສະແດງຢູ່ໃນ ປື້ມຄູ່ມືໄດ້ມີການດັດປັບ ເພື່ອຮັບປະກັນວ່າເນື້ອໃນໆປື້ມຄູ່ມືແລະກົດໝາຍບໍ່ຂັດກັນ. ຮ່າງດຳລັດດັ່ງກ່າວແມ່ນຈະໄດ້ມີການປຶກສາຫາລືຢູ່ໃນກອງປະຊຸມລັດຖະບານ.

**(3) ສິ່ງສຳຄັນສຳລັບປີທີ 4**

ປື້ມນ້ອຍຈະໄດ້ຖືກແຈກຢາຍໄປທົ່ວປະເທດພ້ອມກັບປື້ມຄູ່ມືການຄຸ້ມຄອງໂຄງການລົງທຶນລັດ. ກົດໝາຍດັ່ງກ່າວຈະໄດ້ຖືກແນະນຳຄືນອີກໃນການຝຶກອົບຮົມທົ່ວປະເທດກ່ຽວກັບການຄຸ້ມຄອງການລົງທຶນລັດເພື່ອເຕືອນໃຫ້ພະນັກງານທີ່ກ່ຽວຂ້ອງຮູ້ເຖິງຄວາມສຳຄັນຂອງການນຳໃຊ້.

ໂຄງການຈະໄດ້ສະໜັບສະໜູນກະຊວງ ຜທ ໃນການສ້າງດຳລັດການຈັດຕັ້ງປະຕິບັດ ແລະ ຮັບປະກັນວ່າທຸກໆອົງປະກອບທີ່ຈຳເປັນແມ່ນໄດ້ຖືກບັນຈຸຢູ່ໃນດຳລັດດັ່ງກ່າວ. ຕາມມາດຕະຖານແລ້ວ ກົດໝາຍ, ດຳລັດການຈັດຕັ້ງປະຕິບັດ ແລະ ປື້ມຄູ່ມືການຄຸ້ມຄອງໂຄງການ/ແຜນງານ ການລົງທຶນລັດຈະກາຍເປັນ 3 ເສົາຫຼັກໃນການຄຸ້ມຄອງການລົງທຶນລັດ.

## 2.3 [ໝາກຜົນທີ 1] ບັນດາກິດຈະກຳກ່ຽວກັບການສ້າງທັກສະ(ການຝຶກອົບ/ການຝຶກອົບຮົມໜ້າວຽກ)

**(1) ຄາດຄະເນການບັນລຸໝາກຜົນທີ 1**

ບັນດາກິດຈະກຳກ່ຽວກັບໝາກຜົນທີ 1 ໄດ້ດຳເນີນໄປຢ່າງລາບລື້ນດີ ເຊິ່ງໝາກຜົນທີ່ 1 ແມ່ນ "ພະນັກງານຈາກພະແນກແຜນການແລະການລົງທຶນ (ພຜທ) ຂອງທຸກໆແຂວງ, ພະນັກງານຈາກກົມແຜນການຂອງທຸກໆກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງອື່ນໆ ໄດ້ຮຽນຮູ້ເຖິງພື້ນຖານໃນການຄຸ້ມຄອງການລົງທຶນລັດໂດຍລວມ". ໃນປີນີ້ພະນັກງານແຜນການ ແລະ ບັນດາເຈົ້າຂອງໂຄງການຈາກ 16 ແຂວງແລະນະຄອນ ຈາກກະຊວງ ແລະ ອົງການຈັດຕັ້ງຕ່າງໆ ຂັ້ນສູນກາງ ລວມທັງໝົດ 862 ທ່ານໄດ້ຮຽນຮູ້ວິທີການຄຸ້ມຄອງການລົງທຶນລັດຂັ້ນພື້ນຖານ, ໂດຍຜ່ານການຝຶກອົບຮົມການຄຸ້ມຄອງການລົງທຶນລັດທີ່ຖືກຈັດ ຂຶ້ນໂດຍໂຄງການ. ພາຍຫຼັງ ການຝຶກອົບຮົມບັນດາພະນັກງານພະແນກແຜນການ ແລະ ການລົງທຶນຂອງ 16 ແຂວງ ແລະ ນະຄອນຫຼວງວຽງຈັນ ສາມາດນຳໃຊ້ວິທີການປະເມີນໂຄງການແບບງ່າຍດາຍ ເຂົ້າໃນໜ້າວຽກຕົວຈິງຂອງເຂົາເຈົ້າ. ອີກດ້ານໜຶ່ງມີພຽງແຕ່ກົມແຜນການຂອງໃນ 8 ກະຊວງ ຫຼັກເທົ່ານັ້ນທີ່ໄດ້ນຳໃຊ້ວິທີການປະເມີນໂຄງການເຂົ້າໃນໜ້າວຽກຕົວຈິງ.

**(2) ທົບທວນການຈັດຕັ້ງປະຕິບັດ.**

ບັນດາກິດຈະກຳທີ່ກ່ຽວຂ້ອງເຖິງໝາກຜົນທີ 1 ເຊິ່ງໄດ້ຖືກຈັດຕັ້ງປະຕິບັດຈາກເດືອນຕຸລາ 2009 ເຖິງ ເດືອນ ສິງຫາ 2010 ມີດັ່ງລຸ່ມນີ້:

| |
|---|
| 1) ການຝຶກອົບຮົມສຳລັບບັນດາແຂວງແລະກະຊວງ |
| 2) ຝຶກອົບຮົມໜ້າວຽກ(OJT)ຢູ່ກະຊວງ ຜທ,ແຂວງ,ກະຊວງອື່ນໆ |
| 3) ການປະເມີນຜົນຂອງການຝຶກອົບຮົມແລະການປະເມີນຜົນຂອງການປະເມີນ. |
| 4) ຄຳຄິດຄຳເຫັນຈາກຜົນຂອງການຝຶກອົບຮົມໜ້າວຽກ |
| 5) ການພັດທະນາຫຼັກສູດການຝຶກອົບຮົມ |
| 6) ການຝຶກອົບຮົມໜ້າວຽກ |
| 7) ການປຶກສາຫາລືກ່ຽວກັບການຝຶກອົບຮົມແບບເປັນສະຖາບັນ |

**ກະລຸນາເບິ່ງລາຍລະອຽດຂອງແຕ່ລະກິດຈະກຳດັ່ງຕໍ່ໄປນີ້:**

**1) ການຝຶກອົບຮົມສຳລັບບັນດາແຂວງແລະກະຊວງ**

ການຝຶກອົບຮົມທົ່ວປະເທດກ່ຽວກັບການຄຸ້ມຄອງການລົງທຶນລັດແຕ່ໄດ້ເລີ້ມແຕ່ເດືອນພະຈິກ 2009 ຫາເດືອນກຸມພາ 2010 ໂດຍອີງຕາມການພັດທະນາຫຼັກສູດການຝຶກອົບຮົມ (ເບິ່ງຕາຕະລາງທີ 1). ພະນັກງານແຜນການ ແລະ ບັນດາເຈົ້າຂອງໂຄງການຈາກ 16 ແຂວງ ແລະນະຄອນ ຈາກກະຊວງ ແລະ ອົງການຈັດຕັ້ງຕ່າງໆຂັ້ນສູນກາງ ລວມທັງໝົດ 862 ທ່ານໄດ້ຮຽນຮູ້ວິທີການຄຸ້ມຄອງການລົງທຶນລັດຂັ້ນພື້ນຖານ. 7 ວິທີການຄູ້ມຄອງການລົງທຶນລັດໄດ້ຖືກນຳສະເໜີໃນລະຫວ່າງຝຶກອົບຮົມມີດັ່ງລຸ່ມນີ້:

<u>ຕະຕະລາງທີ 2: ການຝຶກອົບຮົມທົ່ວປະເທດກ່ຽວກັບການຄຸ້ມຄອງການລົງທຶນລັດ</u>

| ຊຸດ | ວັນທີ | ທີມທີ 1 | ທີມທີ 2 | ທີມທີ 3 |
|---|---|---|---|---|
| ຊຸດທີ 1 | 30/11/-<br>4/12/2009 | ຊຽງຂວາງ | ຫົວພັນ | — |
| ຊຸດທີ 2 | 21<br>-25/12/2009 | ບໍລິຄຳໄຊ | ນະຄອນຫຼວງ | ວຽງຈັນ |
| ຊຸດທີ 3 | 4-8/01/ 2010 | ອຸດົມໄຊ | ຫຼວງພະບາງ | ໄຊຍະບູລີ |
| | 11-<br>15/01/2010 | ຜົ້ງສາລີ | ບໍ່ແກ້ວ | ຫຼວງພະບາງ |
| ຊຸດທີ 4 | 25 | ອັດຕະປື | ສາລະວັນ | ສະຫວັນນະເຂດ |

| | | | | |
|---|---|---|---|---|
| | -29/01/2010 | | | |
| | 1-5/02/2010 | ເຊກອງ | ຈຳປາສັກ | ຄຳມ່ວນ |
| | 8-12/02/2010 | 41 ກະຊວງແລະອົງການຈັດຕັ້ງຂັ້ນສູນກາງ | | |

**ວິທີການຄຸ້ມຄອງການລົງທຶນລັດ**

- ແນະນຳຫົວຂໍ້ໃໝ່
  1. ວິທີຂຽນບົດລາຍງານສຳລັບໂຄງການໜີ້ສິນ
  2. ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ
  3. ການຄຸ້ມຄອງທຶນສົມທົບກັບໂຄງການ ODA
- ທວນຄືນຫົວຂໍ້ທີ່ມີຢູ່ແລ້ວ
  4. ວິທີການຂຽນບົດລາຍງານຄວາມຄືບໜ້າສຳລັບໂຄງການສືບຕໍ່
  5. ການປະເມີນໂຄງການສືບຕໍ່ໂດຍການນຳໃຊ້ SPAS
  6. ການຄຸ້ມຄອງແຜນງານ
  7. ການປະເມີນແບບປຽບທຽບ

ອີງຕາມຜົນຂອງການປະເມີນການຝຶກອົບຮົມຈາກຜູ້ເຂົ້າຮ່ວມ,ລະດັບຄວາມພໍໃຈໃນໂປຣແກຣມ ແລະເນື້ອໃນການຝຶກອົບຮົມແມ່ນສູງ. ສຳລັບລະດັບຄວາມເຂົ້າໃຈແມ່ນມີຊ່ອງວ່າງລະຫວ່າງພະນັກງານຈາກ 16 ແຂວງ/ນະຄອນຫຼວງ ແລະ ບັນດາກະຊວງ/ອົງການຈັດຕັ້ງສູນກາງ. 65% ຫຼື 49 ທ່ານຈາກກະຊວງ/ອົງການຈັດຕັ້ງຂັ້ນສູນກາງ ສາມາດບັນລຸລະດັບຄວາມພໍໃນບົດທົດລອງຂອງການຝຶກອົບຮົມ [1], ໃນຂະນະທີ່ມີພຽງແຕ່ 29% ຂອງຜູ້ເຂົ້າຮ່ວມທັງໝົດໃນ 16 ແຂວງ/ນະຄອນຫຼວງ ບັນລຸລະດັບຄວາມພໍໃຈ(ເບິ່ງຕາຕະລາງ 2). ແນວໃດກໍ່ຕາມ ໃນໄລຍະຕໍ່ມາມັນໄດ້ພິສູດໃຫ້ເຫັນວ່າໂດຍລວມແລ້ວ ພະນັກງານແຜນການຂອງ 16 ແຂວງ/ນະຄອນຫຼວງໄດ້ນຳໃຊ້ວິທີທີ່ໄດ້ຮຽນມາເຂົ້າໃນວຽກງານຕົວຈິງຫຼາຍກ່ວາບັນດາກະຊວງ/ອົງການຈັດຕັ້ງຂັ້ນສູນກາງ

ຕະຕະລາງທີ 3: ຜົນຂອງການສອບເສັງໃນການຝຶກອົບຮົມທົ່ວປະເທດ

| | **ບັນດາກະຊວງ** | **ບັນດາແຂວງ** | **ລວມ** |
|---|---|---|---|
| **ຈຳນວນຜູ້ທີ່ຕອບບົດທົດສອບ** | 76 ທ່ານ | 606 ທ່ານ | 682 ທ່ານ |
| **ຈຳນວນຜູ້ທີ່ບັນລຸລະດັບຄວາມພໍໃຈ (%)** | 49 ທ່ານ (65%) | 175 ທ່ານ (29%) | 224 ທ່ານ (33%) |

[1] ລະດັບຄວາມພໍໃຈແມ່ນຖືກກຳນົດເອົາ 70% ຂອງຄະແນນເສັງທັງໝົດ

(ເບິ່ງຕາຕະລາງ 3) ຈຸດປະສົງຫຼັກຂອງການຝຶກອົບຮົມໜ້າວຽກແມ່ນເພື່ອ 1) ສະໜັບສະໜູນການດຳເນີນການຍື່ນຂໍງົບປະມານປະຈຳປີ 2010/2011 ແລະ 2) ຕິດຕາມການຝຶກອົບຮົມກ່ຽວກັບການຄຸ້ມຄອງການລົງທຶນລັດແລະການຄຸ້ມຄອງທາງດ້ານການເງິນ. ຜົນຂອງການຝຶກອົບຮົມໜ້າວຽກແມ່ນຄ້າຍຄືກັບປີຜ່ານມາ. ທຸກໆ 16 ແຂວງ/ນະຄອນຫຼວງໄດ້ນຳໃຊ້ວິທີການປະເມີນແບບງ່າຍດາຍທີ່ຖືກແນະນຳໃຫ້ໃນລະຫວ່າງຝຶກອົບຮົມເຂົ້າໃນວຽກງານຕົວຈິງໃນຂະນະທີ່ມີພຽງແຕ່ 2 ໃນ 9 ກະຊວງຂ້າງລຸ່ມນີ້ປະຕິບັດການປະເມີນ.

ຕາຕະລາງ 4: ຕາຕະລາງການຝຶກອົບຮົມໜ້າວຽກ(OJT)

| | ທີມທີ1: | ທີມທີ 2: | ທີມທີ 3: | ທີມທີ 4: | ທີມທີ 5 : | ທີມທີ 6: |
|---|---|---|---|---|---|---|
| 18-19 ກຸມພາ | | | | | ກະຊວງການເງິນ | ນະຄອນຫຼວງ |
| 22-23 ກຸມພາ | ຫຼວງພະບາງ | ສາລະວັນ | ສະຫວັນນະເຂດ | ບໍ່ແກ້ວ | ກະຊວງກະສິ ກຳ - ປ່າໄມ້ | ກະຊວງສຶກ ສາທິການ |
| 25-26 ກຸມພາ | ໄຊຍະບູລີ | ເຊກອງ | ຄຳມ່ວນ | ຫຼວງນ້ຳທາ | ກະຊວງໂຍທາ ແລະ ຂົນສົ່ງ | ກະຊວງສາທາລະນະສຸກ |
| 1-2 ມີນາ | ຊຽງຂວາງ | ອັດຕະປື | ບໍລິຄຳໄຊ | ອຸດົມໄຊ | ກະຊວງພະລັງ ງານ ແລະບໍ່ແຮ່ | ກະຊວງອຸດສະຫະກຳແລະການຄ້າ |
| 4-5 ມີນາ | ຫົວພັນ | ຈຳປາສັກ | ວຽງຈັນ | ຜົ້ງສາລີ | ກະຊວງຖະແຫຼງຂ່າວ ແລະວັດທະນະທຳ | ກະຊວງແຮງງານ ແລະສະຫວັດດີການສັງຄົມ |

**3) ການປະເມີນຜົນການຝຶກອົບຮົມແລະການປະເມີນຜົນຂອງການປະເມີນ.**

ສະຫຼຸບແລ້ວ ການຝຶກອົບຮົມທົ່ວປະເທດດັ່ງກ່າວ ໄດ້ບັນລຸຜົນສຳເລັດພາຍໃຕ້ໃນເນື້ອໃນທີ່ວ່າ " ທົບທວນຄືນ ແລະ ຍົກລະດັບ" ເຊິ່ງໄດ້ທົບທວນຄືນເນື້ອໃນທີ່ສຳຄັນ ແລະ ແນະນຳວິທີການ ແລະ ເຄື່ອງມືໃໝ່ສຳລັບການຄຸ້ມຄອງການລົງທຶນລັດ. ແນວໃດກໍ່ຕາມບາງປະເດັນກ່ຽວກັບໂປຣແກມ ການຝຶກອົບຮົມ,ການຈັດສັນເວລາ, ລະດັບຄວາມເຂົ້າໃຈ ແລະ ທັກສະໃນການອຳນວຍຄວາມສະດວກໃຫ້ແກ່ຜູ້ເຂົ້າຮ່ວມຂອງຄູຝຶກຍັງຕ້ອງການໆປັບປຸງຕື່ມ.

ສຳລັບການປະເມີນຜົນຂອງການປະເມີນ, ການປະເມີນຜົນ,ກະຊວງ ຜທ ກຳລັງປະເມີນຄຸນນະພາບຂອງການປະເມີນໂຄງການຈາກ 16 ແຂວງ/ນະຄອນຫຼວງແລະບັນດາກະຊວງ. ນອກນັ້ນ ການປະເມີນຜົນຂອງການປະເມີນ ຈະໄດ້ຖືກນຳສະເໜີເປັນຫົວບົດໜຶ່ງ ສຳລັບການຝຶກອົບ

ຣິມທົ່ວປະເທດ ໃນປີໜ້າເພື່ອຖອດຖອນບົດຮຽນ ແລະນຳໄປປັບປຸງການປະເມີນໂຄງການທາງດ້ານຄຸນນະພາບ ແລະ ປະລິມານ.

**4) ຄຳຄິດຄຳເຫັນຈາກຜົນຂອງການຝຶກອົບຮົມໜ້າວຽກ:**

ໂຄງການໄດ້ແລກປ່ຽນຜົນຂອງການປະເມີນຂອງການຝຶກອົບຮົມດັ່ງກ່າວຂ້າງເທິງ ແລະຜົນຂອງການປະເມີນການຝຶກອົບຮົມໜ້າວຽກກັບບັນດາກະຊວງແລະແຂວງ. ນອກຈາກນີ້ ໂຄງການຍັງມີແຜນທີ່ຈະແລກປ່ຽນ ແລະສະໜອງລາຍລະອຽດຂອງຜົນການຝຶກອົບຮົມໜ້າວຽກກ່ຽວກັບ 1) ຄວາມເໝາະສົມໃນການດຳເນີນການຍື່ນສະເໜີງົບປະມານປະຈຳປີສຳລັບສົກປີ 2010/11 ແລະ 2) ອັດຕາສ່ວນການປະເມີນຂອງບັນດາໂຄງການລົງທຶນລັດທີ່ຖືກສະເໜີງົບປະມານ

**5) ການພັດທະນາຫຼັກສູດການຝຶກອົບຮົມ.**

ທິດທາງການຝຶກອົບຮົມໃນປີໜ້າແມ່ນ ອີງຕາມການປະເມີນຜົນຂອງການຝຶກອົບຮົມທີ່ກ່າວມາຂ້າງເທິງເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

**ທິດທາງການຝຶກອົບຮົມ**

(1) ເນັ້ນໃສ່ວົງຈອນຂັ້ນຕອນການຍື່ນສະເໜີງົບປະມານການລົງທຶນລັດ.

(2) ຍົກລະດັບຄວາມສາມາດຂອງພະນັກງານພະແນກແຜນການແລະການລົງທຶນໃນການຄຸ້ມຄອງການລົງທຶນລັດ(ຈັດຝຶກອົບຮົມສຳລັບຄູຝຶກ (TOT) ໃຫ້ພະນັກງານ ພຜທ

(3) ການທົດລອງຝຶກ 8 ຂະແໜງການຫຼັກ ເພື່ອຍົກສູງຄວາມມີປະສິດທິຜົນທາງດ້ານຄ່າໃຊ້ຈ່າຍ

ອີງຕາມທິດທາງທີ່ກຳນົດຂ້າງເທິງ ການຝຶກອົບຮົມສຳລັບປີໜ້າມີລາຍລະອຽດຄືດັ່ງລຸ່ມນີ້:

ຕາຕະລາງທີ 5: ໂປຣແກມການຝຶກອົບຮົມ ແລະການຝຶກອົບຮົມໜ້າວຽກ ສົກປີ 2010—2011

| ຝຶກອົບຮົມ/ ຕິດຕາມ | ເວລາ | ສະຖານ ທີ່ | ເວ ລາ | ຄູຝຶກ ຫຼັກ | ຜູ້ເຂົ້າ ຮ່ວມ | ຈຸດປະ ສົງຫຼັກ |
|---|---|---|---|---|---|---|
| (1) ສຳມະນາ ສຳລັບຫົວໜ້າ ພຜທ | ຕົ້ນເດືອນ 11/2010 | ນະຄອນ ຫຼວງວຽງຈັນ | 2 ມື້ | ລັດຖະມົນ ຊ່ວຍວ່າ ການ ກະຊວງ ຜທ | ຫົວໜ້າພຜທ ແຂວງ | ພັດທະນາໂຄງຮ່າງງົບປະມານ PIPປະຈຳປີພ້ອມກັບແນວຄວາມ ຄິດຂອງຫົວໜ້າພະແນກ |
| (2) ຝຶກອົບຮົມ ຈາກກະຊວງຜທ ເຖິງ ພຜທ | ເດືອນ 11/2010 | ນະຄອນ ຫຼວງວຽງຈັນ | 5 ມື້ | ພະນັກ ງານກະ ຊວງ ຜທ | ພະນັກງານ ພຜທ | ເຂົ້າໃຈວົງຈອນຂອງ PIPແລະສາມາດສອນໃຫ້ບັນດາເຈົ້າຂອງໂຄງການ |

| | | | | | | |
|---|---|---|---|---|---|---|
| (3) ຝຶກອົບຮົມ ຈາກ ພຜທ ເຖິງ ເຈົ້າຂອງໂຄງ ການ | ເດືອນ 12/2010 | ແຕ່ລະ ແຂວງ/ນະ ຄອນຫຼວງ | 2 ມື້ | ພະນັກ ງານ ພຜທ | ເຈົ້າຂອງ ໂຄງການໃນ 8 ຂະແໜງ ການຫຼັກ | ພັດທະນາໂຄງຮ່າງ ງົບປະມານPIP ຂອງຄະແໜງການ ແລະທັກສະໃນ ພາກປະຕິບັດຕົວຈິງ ໃນການຍື່ນສະ ເໜີຂໍງົບປະມານການ ລົງທຶນລັດ. |
| (4) ຕິດຕາມຈາກ ກະຊວງ ຜທ ເຖິງ ພຜທ | ເດືອນ 02-03/2011 | ແຕ່ລະ ແຂວງ/ນະ ຄອນຫຼວງ | 2 ມື້ | ພະນັກ ງານກະ ຊວງ ຜທ | ພະນັກງານ ພຜທ | ພຜທຈະໄດ້ຮັບການສະໜັບສະ ໜູນຈາກກະຊວງຜທ ໃນການປະ ເມີນໂຄງການ |

### 6) ການຝຶກອົບຮົມສຳລັບຄູຝຶກ (TOT)

ໂຄງການໄດ້ຈັດຕັ້ງປະຕິບັດການຝຶກອົບຮົມສຳລັບຄູຝຶກໃຫ້ຄູຝຶກປະມານ 25 ທ່ານຈາກກົມປະເມີນຜົນ,ກົມແຜນການແລະກົມຮ່ວມມືສາກົນ ກະຊວງ ຜທ ໃນລະຫວ່າງເດືອນສິງຫາ 2010 ໂດຍມີຈຸດປະສົງດັ່ງຕໍ່ໄປນີ້:

- ➢ ເພື່ອເຮັດໃຫ້ຄູຝຶກຈາກກະຊວງ ຜທ ເຂົ້າໃຈ ແລະ ຊຶມຊັບເອົາທຸກໆຫົວຂໍ້ກ່ຽວກັບການຝຶກອົບຮົມໃນປີໜ້າ.
- ➢ ເພື່ອເຮັດໃຫ້ຄູຝຶກຈາກກະຊວງ ຜທ ເຂົ້າໃຈ ແລະ ຊຶມຊັບວິທີການນຳສະເໜີ ການອຳນວຍຄວາມສະດວກ ແລະການສິດສອນ.
- ➢ ເພື່ອເຮັດໃຫ້ຄູຝຶກຈາກກະຊວງ ຜທ ປະສົບຜົນສຳເລັດໃນການຖ່າຍທອດຈຸດປະສົງການຝຶກອົບ ຮົມໄປສູ່ພະນັກງານຂັ້ນແຂວງແລະຂັ້ນສູນກາງ.

### 7) ການເຜີຍແຜ່ການຝຶກອົບຮົມແບບເປັນສະຖາບັນ

ເພື່ອຍົກສູງຄວາມຍືນຍົງທາງດ້ານການເງິນຂອງການຝຶກອົບຮົມ ກະຊວງ ຜທ,ອົງການ ໄຈກາ ແລະໂຄງການໄດ້ຕົກລົງເປັນເອກະພາບວ່າທາງກະຊວງ ຜທ ຈະໄດ້ປະກອບສ່ວນທຶນສົມທົບເຂົ້າ ໃນຄ່າໃຊ້ຈ່າຍສຳລັບຈັດຝຶກອົບຮົມ. ອີງຕາມການຕົກລົງ,ທຶນສົມທົບຈຳນວນ 321,34 ລ້ານ ຫຼື 1/3 ຂອງຄ່າໃຊ້ຈ່າຍສຳລັບຈັດຝຶກອົບຮົມລວມທັງການຝຶກອົບຮົມໜ້າວຽກໄດ້ຖືກອະນຸມັດຈາກສະພາແຫ່ງຊາດໃນປີ 2009. ໃນປີນີ້ ທຶນສົມທົບມູນຄ່າ 693.46 ລ້ານກີບ ຫຼື 1/2 ຂອງໃຊ້ຈ່າຍສຳລັບການຈັດຝຶກອົບຮົມທັງໝົດໄດ້ຖືກຍື່ນສະເໜີໄປຍັງສະພາແຫ່ງຊາດ.

### (3) ສິ່ງທີ່ສຳຄັນສຳລັບປີທີ 4.

ສິ່ງທີ່ຄວນເອົາໃຈໃສ່ຕົ້ນຕໍແມ່ນ ການຝຶກອົບຮົມຄັ້ງທຳອິດໃຫ້ແກ່ພະນັກງານຈາກພະແນກແຜນ ການແຂວງແລະກົມແຜນການກະຊວງ. ດັ່ງນັ້ນ, ທາງໂຄງການຈະພະຍາຍາທີ່ຈະເຮັດໃຫ້ພວກເຂົາເຈົ້າກາຍເປັນຄູຝຶກທີ່ມີຄຸນນະພາບ ແລະ ຖ່າຍທອດຄວາມຮູ້ ແລະ ທັກສາກ່ຽວກັບການຄຸ້ມຄອງການລົງທຶນລັດໃຫ້ແກ່ບັນດາເຈົ້າຂອງໂຄງການ ແລະ ພະນັກງານຢູ່ຫ້ອງການເມືອງ.

## 2.4 [ໝາກຜົນທີ 2] ກິດຈະກຳສຳລັບການຄູ້ມຄອງ ແລະ ທາງດ້ານງົບປະມານ ແລະ ການເງິນ

**(1) ຄາດຄະເນການບັນລຸໝາກຜົນທີ 2.**

ການຝຶກອົບຮົມທາງດ້ານການເງິນໄດ້ຖືກຈັດຂຶ້ນສຳລັບພະນັກງານ ພຜທ ຂອງທຸກໆແຂວງໃນເດືອນມັງກອນ 2010 ຜູ້ເຂົ້າຮ່ວມສາມາດເຂົ້າໃຈແລະຍອມຮັບເນື້ອໃນລະອຽດກ່ຽວກັບການຄຸ້ມຄອງທາງດ້ານການເງິນ ຈຶ່ງສາມາດເວົ້າໄດ້ວ່າ ມີຄວາມເປັນໄປໄດ້ສູງທີ່ຈະບັນລຸຜົນໄດ້ຮັບສຸດທ້າຍຂອງການນຳສະເໜີການຄຸ້ມຄອງທາງດ້ານງົບປະມານແລະການເງິນຂອງການລົງທຶນລັດ.

ເພື່ອເຮັດໃຫ້ວິທີການຄຸ້ມຄອງທາງດ້ານການເງິນເປັນລະບົບສະຖາບັນ ມັນເປັນສິ່ງຈຳເປັນທີ່ບັນດາວິທີການຄຸ້ມຄອງເຫຼົ່ານີ້ ຈະໄດ້ຖືກນຳໃຊ້ໃນການກຳນົດງົບປະມານລົງທຶນລັດ ໃນກະຊວງ ຜທ ແລະແຂວງ ທີມງານໂຄງການພີແຄັບ 2 ໄດ້ວາງແຜນຕິດຕາມກວດກາໜ້າວຽກດັ່ງກ່າວລວມທັງການຈັດຝຶກອົບຮົມ ແລະນຳສະເໜີເພີ່ມເຕີມອີກ ເພື່ອຮັບປະກັນວ່າເຄື່ອງມືການຄຸ້ມຄອງທາງດ້ານການເງິນຈະຮັບຮອງໂດຍກະຊວງແຜນການແລະແຂວງ.

ອົງປະກອບຂອງການຄຸ້ມຄອງງົບປະມານການລົງທຶນລັດບໍ່ໄດ້ໃນເວລານີ້ເນື່ອງຈາກວ່າແນວທາງງົບປະມານສຳລັບສົກປີ 2010-11 ຍັງບໍ່ທັນໄດ້ສ້າງໃນເດືອນທັນວາ.

**(2) ທົບທວນການຈັດຕັ້ງປະຕິບັດ**

ກິດຈະກຳທີ່ຈັດຕັ້ງປະຕິບັດເພື່ອໃຫ້ບັນລຸໝາກຜົນນີ້ມີຄືດັ່ງລຸ່ມນີ້:

**1) ການພັດທະນາໂປຣແກມ, ຫຼັກສູດ ແລະອຸປະກອນການຝຶກອົບຮົມ**

ໂປຣແກມການຝຶກອົບຮົມກ່ຽວກັບການຄຸ້ມຄອງທາງດ້ານການເງິນສຳລັບແຂວງໄດ້ຖືກສ້າງຂຶ້ນທີ່ມີລາຍລະອຽດດັ່ງຕໍ່ໄປນີ້:

- ການຝຶກອົບຮົມຈະຖືກຈັດຂຶ້ນ 3 ຄັ້ງ ສຳລັບຂົງເຂດພາກເໜືອ,ພາກກາງ ແລະພາກໃຕ້. ຄາດວ່າບັນດາພະນັກງານຈາກບັນດາແຂວງຈະແລກປ່ຽນປະສົບການຂອງເຂົ້າເຈົ້າກ່ຽວກັບການຄຸ້ມຄອງທາງດ້ານການເງິນກັບພະນັກງານຈາກບັນດາແຂວງທີ່ໃກ້ຄຽງພາຍຫຼັງການຝຶກອົບຮົມ.
- ການຝຶກອົບຮົມແມ່ນຖືກຈັດຂຶ້ນທີ່ນະຄອນຫຼວງວຽງຈັນ(ບໍ່ໄດ້ຈັດຂຶ້ນຢູ່ແຂວງ)ເພື່ອຄວາມມີປະສິດພາບໃນການດຳເນີນງານ.
- ໄລຍະເວລາໃນການຝຶກອົບຮົມແມ່ນ 2 ມື້, ມື້ທຳອິດແມ່ນຮຽນຮູ້ກ່ຽວກັບຮູບແບບຂອງການຄຸ້ມຄອງທາງດ້ານການເງິນ ແລະໃນມື້ທີ 2 ແມ່ນຮຽນຮູ້ວິທີການຄຸ້ມຄອງທາງດ້ານການເງິນ. ຫຼັງຈາກນັ້ນຜູ້ເຂົ້າຮ່ວມຈະໄດ້ຝຶກຫັດໂດຍນຳໃຊ້ກໍລະນີສຶກສາໃນຕອນແລງຂອງມື້ທີ 2.

<table>
<tr><td rowspan="2">ມື້ທີ 1</td><td>ພາກເຊົ້າ</td><td>ພາບລວມກ່ຽວກັບການຄຸ້ມຄອງທາງດ້ານການເງິນ<br>➢ ບົດຝຶກຫັດທີ 1: ຄິດໄລ່ໄລຍະການຊຳລະ<br>➢ ບົດຝຶກຫັດທີ 2: ຄິດໄລ່ໄລຍະການຊຳລະຂອງແຕ່ລະແຂວງ</td></tr>
<tr><td>ພາກບ່າຍ</td><td rowspan="2">ການວິເຄາະທາງດ້ານການເງິນຂອງແຂວງແລະການວາງແຜນງົບປະມານໂດຍ ພຜທ<br>➢ ບົດຝຶກຫັດທີ 3: ອະນາຄົດ<br>➢ ບົດຝຶກຫັດທີ 4: ວິເຄາະວົງເງິນເຖິງກຳນົດເກີນເປົ້າໝາຍ<br>➢ ບົດຝຶກຫັດທີ 5: ການສ້າງລະບົບພາບລວມແນວໂນ້ມກ່ຽວກັບ ລາຍຈ່າຍໄລຍະກາງຂອງPIP</td></tr>
<tr><td rowspan="2">ມື້ທີ 2</td><td>ພາກເຊົ້າ</td></tr>
<tr><td>ພາກບ່າຍ</td><td>ຈັດປະຊຸມປຶກສາຫາລື:<br>ໃນເມື່ອວົງເງິນເຖິງກຳນົດຖືກສະເໜີຂໍຫຼາຍກ່ວາງົບປະມານທີ່ຈັດສັນໃຫ້<br>- ພະນັກງານຄວນຈະເຈລະຈາແນວໃດກັບບັນດາຂະແໜງການ?<br>- ພະນັກງານຄວນຈະລາຍງານແນວໃດໃຫ້ແກ່ເຈົ້າແຂວງຟັງ?</td></tr>
</table>

**ຫຼັກສູດແລະເນື້ອໃນຂອງການຝຶກອົບໄດ້ຖືກພັດທະນາດັ່ງລຸ່ມນີ້:**

ກ) ວິທີການຄຸ້ມຄອງທາງດ້ານການເງິນ

ຂ) ການວິເຄາະທາງດ້ານການເງິນຂອງແຂວງແລະການວາງແຜນງົບປະມານຂອງ ພຜທ

ຄ) ການວິເຄາະທາງດ້ານການເງິນຂອງແຂວງ ແລະ ການວາງແຜນງົບປະມານຂອງ ພຜທ ຫຼັກສູດ ຂອງການຝຶກອົບຮົມຢູ່ພາກແຂວງແມ່ນ ຂໍ້ ກ)ແລະຂໍ້ ຄ) ແລະສຳລັບກະຊວງ ຜທ ແມ່ນຂໍ້ ກ) ແລະ ຂໍ້ ຂ).

ການຝຶກອົບຮົມທາງການຄຸ້ມຄອງທາງດ້ານການເງິນແມ່ນແນໃສ່ໄລຍະເວລາໃນການຊຳລະສະສາງ ຕົວຢ່າງ: ແຂວງຈະໃຊ້ເວລາຈັກປີໃນການສຳເລັດການສຳລະສະສາງມູນຄ່າຂອງໂຄງການໃດໜຶ່ງ. ນອກນັ້ນຍັງແນໃສ່ການອະທິບາຍວິທີການຄຸ້ມຄອງໄລຍະເວລາການຊຳລະ, ການກຳນົດເປົ້າໝາຍຂອງວົງເງິນເຖິງກຳນົດ ແລະການເຈລະຈາກັບບັນດາຂະແໜງການ. ໃນການຝຶກອົບຮົມ, ຜູ້ເຂົ້າຮ່ວມຈະໄດ້ເຮັດບົດຝຶກຫັດເພື່ອພັດທະນາທັກສະໃນການວິເຄາະຂອງເຂົາເຈົ້າ.

**2) ການຝຶກອົບຮົມສຳລັບຄູຝຶກ (TOT)**

ການຝຶກອົບຮົມກ່ຽວກັບການຄຸ້ມຄອງທາງດ້ານການເງິນຖືກຈັດຂຶ້ນທີ່ນະຄອນຫຼວງວຽງຈັນໃນເດືອນມັງກອນ 2010 ທີ່ຜ່ານມາມີລາຍລະອຽດດັ່ງລຸ່ມນີ້:

- ວັນທີ 14-15 ເດືອນມັງກອນ 2010 : ຝຶກອົບຮົມໃຫ້ບັນດາແຂວງພາກກາງ.
- ວັນທີ 19-20 ເດືອນມັງກອນ 2010: ຝຶກອົບຮົມໃຫ້ບັນດາແຂວງພາກໃຕ້.
- ວັນທີ 21-22 ເດືອນມັງກອນ 2010: ຝຶກອົບຮົມໃຫ້ບັນດາແຂວງພາກເໜືອ.
- ວັນທີ 26-27 ເດືອນມັງກອນ 2010: ຝຶກອົບຮົມໃຫ້ພະນັກງານກະຊວງ ຜທ

❋ ຈຳນວນຜູ້ເຂົ້າຮ່ວມຝຶກອົບຮົມມີດັ່ງລຸ່ມນີ້:

- ພະນັກງານຈາກບັນດາແຂວງພາກກາງ 20 ທ່ານ
- ພະນັກງານຈາກບັນດາແຂວງພາກໃຕ້ 22 ທ່ານ
- ພະນັກງານຈາກບັນດາແຂວງພາກເໜືອ 28 ທ່ານ
- ພະນັກງານຈາກກະຊວງ ຜທ 11 ທ່ານ

**4) ການປັບປຸງວິທີການຈັດສັນງົບປະມານແລະການຄຸ້ມຄອງທາງດ້ານງົບປະມານການເງິນຂອງໂຄງການລົງທຶນລັດ.**

ພາກທີ່ກ່ຽວກັບການຄຸ້ມຄອງທາງດ້ານການເງິນໄດ້ຖືກປັບປຸງໃນປື້ມຄູ່ມືການຄຸ້ມຄອງໂຄງການລົງທຶນລັດ ແລະ ປື້ມຄູ່ມືສະເພາະອື່ນໆໂດຍອີງຕາມຜົນຂອງການຝຶກອົບຮົມ ແລະ ການດຳເນີນການຈັດສັນງົບປະມານຕົວຈິງ. ເນື້ອໃນກ່ຽວກັບການຝຶກອົບຮົມການຄຸ້ມຄອງທາງດ້ານການເງິນກໍ່ໄດ້ຖືກປັບປຸງ.

**(3) ສິ່ງສຳຄັນສຳລັບປີທີ 4.**

ການສຳມະນາກ່ຽວກັບການວາງແຜນງົບປະມານການລົງທຶນລັດ/ການຄຸ້ມຄອງດ້ານການເງິນໄດ້ມີແຜນທີ່ຈະຈັດຂຶ້ນໃນເດືອນພະຈິກ 2010. ພຜທແຂວງ ບັນດາຫົວໜ້າພະແນກແຜນການແລະການລົງທຶນແຂວງ ຈະໄດ້ຖືກເຊີນ. ດັ່ງນັ້ນ ຜູ້ທີ່ມີສິດຕັດສິນໃຈຈະສາມາດວາງແນວທາງໃນການຄຸ້ມຄອງງົບປະມານແລະການເງິນກ່ອນທີ່ພະນັກງານຂອງເຂົາຈະເລີ່ມຕົ້ນການກະກຽມສະເໜີຂໍງົບປະມານການລົງທຶນລັດປະຈຳປີ.

ຮ່າງແນວທາງລວມທັບທິດທາງການພັດທະນາແຂວງ, ການຈັດສັນງົບປະມານ ແລະການຄຸ້ມຄອງທາງດ້ານການເງິນແລະຕາຕະລາງການກະກຽມງົບປະມານໃນເວລາສຳມະນາ.

ການປະສານງານແລະການດັດປັບລະຫວ່າງວິທີການພັດທະນາການຄຸ້ມຄອງ ຈັດສັນງົບປະມານແລະການສະເໜີຂໍງົບປະມານແມ່ນເປັນສິ່ງຈຳເປັນເພາະວ່າຖ້າສອງສິ່ງນີ້ບໍ່ເຂົ້າກັນແລ້ວຈະເຮັດໃຫ້ມີຂໍ້ຂັດແຍ່ງເກີດຂຶ້ນ.

## 2.5 [ ໝາກຜົນທີ 4 ] ກິດຈະກຳສຳລັບການປັບປຸງວິທີການຄຸ້ມຄອງການລົງທຶນລັດ.

### 2.5.1 [ ໝາກຜົນທີ 4.1 ] ການຄຸ້ມຄອງທຶນສົມທົບຕໍ່ໂຄງການ ODA.

**(1) ຄາດຄະເນການບັນລຸໝາກຜົນທີ 4.1**

ໃນຕາຕະລາງລຸ່ມນີ້ ການຈັດຕັ້ງປະຕິບັດກິດຈະກຳເພື່ອໃຫ້ບັນລຸໝາກຜົນທີ 4 ແມ່ນກຳລັງດຳເນີນໄປໄດ້ດ້ວຍດີ ແລະຄາດວ່າຈະສາມາດບັນລຸໝາກຜົນດັ່ງກ່າວພາຍໃນເວລາໂຄງການສຳເລັດ. ທາງໜ້າວຽກທີ່ຍັງເຫຼືອສຳລັບໂຄງການໄລຍະຕໍ່ໄປແມ່ນ: 1) ການເຮັດໃຫ້ບັນດາປື້ມຄູ່ມື

ຕ່າງໆຖືກຮັບຮອງ ໂດຍລັດຖະມົນຕີກະຊວງ ຜທ ແລະ 2) ສືບຕໍ່ການພັດທະນາຄວາມອາດສາມາດໃນການຄຸ້ມຄອງ ໂຄງການລົງທຶນລັດຢ່າງເປັນເອກະລາດ ໂດຍການນຳໃຊ້ບັນດາປື້ມຄູ່ມືຕ່າງໆ. ມັນມີຄວາມເປັນໄປໄດ້ສຳລັບໂຄງການທີ່ຈະສຳ ເລັດໜ້າວຽກດັ່ງກ່າວ ຖ້າການຈັດຕາຕະລາງກິດຈະກຳສຳລັບໂຄງການໄລຍະຕໍ່ໄປບໍ່ມີອຸປະສັກ.

ຕາຕະລາງທີ 6 ການບັນລຸໝາກຜົນທີ 4-1.

| ໂຕຊີ້ວັດ | ການບັນລຸຜົນ |
|---|---|
| 4-1 "ປື້ມຄູ່ມືສຳລັບການຄຸ້ມຄອງໂຄງການ" ແລະ ປື້ມຄູ່ມືສະເພາະອື່ນໆ ແມ່ນໄດ້ຖືກ ຍົກລະດັບ ຫຼືພັດທະນາເຊິ່ງໄດ້ກວມເອົາຫົວຂໍ້ກ່ຽວກັບການຄຸ້ມຄອງທຶນ ສິນທິບກັບ ODAແລະການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ. ບັນດາປື້ມຄູ່ມືດັ່ງກ່າວໄດ້ຖືກ ອະນຸມັດ ແລະແຈກຢາຍ ເຖິງທຸກອົງການຈັດຕັ້ງລັດທີ່ກ່ຽວຂ້ອງ. | ( ໄດ້ບັນລຸແລະຍົກເວັ້ນການແຈກຢາຍປື້ມຄູ່ມືສະເພາະ)<br>1) ວົງຈອນຂອງວຽກງານການຍື່ນແບບຟອມເກັບກຳຂໍ້ມູນແບບກະທັດຮັດ (SPIS)ແລະການປະເມີນແບບປຽບທຽບທີ່ສະທ້ອນເຖິງການຄຸ້ມຄອງທຶນສິນທິບກັບ ODA ໄດ້ຖືກພັດທະນາ ແລະ ລວມເປັນເນື້ອໃນຂອງປື້ມຄູ່ມືຫົວໃຫຍ່ແລະຫົວນ້ອຍ ພາຍຫຼັງ ການປຶກສາຫາລືລະຫວ່າງຄູ່ຮ່ວມງານໃນກົມຕ່າງໆລວມທັງກົມຮ່ວມມືສາກົນ, ກະຊວງ ຜທ.<br>2) ປື້ມຄູ່ມືການຄຸ້ມຄອງໂຄງການ(ຫົວໃຫ່ຍ)ໄດ້ຖືກແຈກຢາຍເຖິງ ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງທີ່ໄດ້ຮັບການຝຶກອົບຮົມເດືອນ ທັນວາ 2009 ເຖິງເດືອນກຸມພາ 2010 (ເຊິ່ງເປັນຄັ້ງທີ 3 ທີ່ໂຄງ ການຈັດຝຶກອົບຮົມ)<br>3) ປື້ມຄູ່ມືລວມໄດ້ຮັບການປັບປຸງໃນເດືອນສິງຫາ 2008 ໂດຍອີງຕາມຜົນຂອງການປະເມີນຜົນການຝຶກອົບຮົມ.<br>4) ປື້ມຄູ່ມືສະເພາະ ລວມທັງເນື້ອໃນທີ່ກ່າວມາຂ້າງເທິງ ໄດ້ຖືກກະກຽມໃນເດືອນສິງຫາ 2010 ແລະ ຈະຖືກແຈກຢາຍໃນເວລາຈັດຝຶກອົບຮົມສຳລັບໄລຍະໜ້າ ພາຍຫຼັງການດັດແກ້ແລະອະນຸມັດຈາກກະຊວງ ຜທ. |

<table>
<tr>
<td>4.3 ພະນັກງານກະ ຊວງ ຜທ ຫຼາຍກ່ວາ 20 ທ່ານ ແລະພະນັກງານຂອງແຕ່ ລະ ແຂວງ,ກະຊວງ,ອົງການ ຈັດຕັ້ງທີ່ກ່ຽວຂ້ອງຫຼາຍ ກ່ວາ 5 ທ່ານ ສາມາດ ຄຸ້ມຄອງການລົງທຶນລັດ ໃຫ້ສອດຄ່ອງກັບປື້ມຄູ່ມື ທົ່ວລວມ ແລະ ປື້ມຄູ່ມື ສະເພາະທີ່ໄດ້ຖືກປັບປຸງ ຫຼືຍົກລະດັບໃໝ່ ແລະ ຍັງ ສາມາດຝຶກອົບຮົມໃຫ້ ພະນັກງານທີ່ກ່ຽວຂ້ອງ ຂັ້ນແຂວງ ແລະເມືອງ</td>
<td>(ພາກສ່ວນທີ່ກ່ຽວກັບຄວາມສາມາດຂອງຝຶກແມ່ນໄດ້ບັນລຸແຕ່ຄວາມສາມາດ ໃນການຄຸ້ມຄອງການຝຶກອົບຮົມ ຄວນຈະໄດ້ຖືກ ຍົກລະດັບຕື່ມ)<br>
1)ໃນທ້າຍເດືອນມັງກອນ 2010 ການຝຶກອົບຮົມກ່ຽວກັບການ ຄຸ້ມຄອງການ ລົງທຶນລັດໄລຍະທີ 3)ໄດ້ຖືກຈັດຕັ້ງປະຕິບັດຈາກເດືອນພະຈິກ 2009 ຫາ ເດືອນກຸມພາ 2010 ຈຳນວນຂອງພະ ນັກງານທີ່ເຂົ້າຮ່ວມຝຶກອົບຮົມໄດ້ຖືກສັງ ລວມໃນຕາຕະລາດັ່ງລຸ່ມ ນີ້:<br>
<u>ຈຳນວນຂອງຜູ້ເຂົ້າຮ່ວມຝຶກອົບຮົມສົກປີ 2009-2010</u>
<table>
<tr><th>ອົງການທີ່ຂຶ້ນກັບ</th><th>ຈຳນວນພະນັກງານທີ່ຖືກຝຶກ</th></tr>
<tr><td>ກະຊວງ ຜທ</td><td>20 ທ່ານ(ໄດ້ຮັບການຝຶກໃຫ້ເປັນ ຄູຝຶກ)</td></tr>
<tr><td>ພຜທ ແຂວງ</td><td>204 ທ່ານ(ຍົກເວັ້ນແຂວງຊຽງ ຂວາງແລະທົ່ວພັນ)</td></tr>
<tr><td>ບັນດາກະຊວງແລະ ອົງການຈັດ ຕັ້ງກ່ຽວຂ້ອງຕ່າງໆ</td><td>495 ທ່ານ(ຍົກເວັ້ນແຂວງຊຽງ ຂວາງ ແລະທົ່ວພັນ)</td></tr>
<tr><td>ບັນດາເຈົ້າຂອງໂຄງການຂັ້ນ ແຂວງ</td><td>100 ທ່ານ</td></tr>
<tr><td>ລວມ</td><td>801 ທ່ານ</td></tr>
</table>
2) 93% ຫຼື 642 ໃນ 762 ທ່ານ ຈາກແຂວງແລະ 87% ຫຼື 66 ໃນ76ທ່ານ ຈາກກະຊວງຕອບແບບທົດສອບທີ່ສະແດງໃຫ້ເຫັນເຖິງຄວາມຮູ້ກ່ຽວກັບການ ຄຸ້ມຄອງການລົງທຶນລັດໄດ້ຮັບການພັດທະ ນາໂດຍຜ່ານການຝຶກອົບຮົມ.<br>
3) 60%ຫຼື363ໃນ762ທ່ານຈາກແຂວງແລະ95%ຫຼື72ໃນ76 ທ່ານຈາກ ກະຊວງສາມາດຕອບຄຳຖາມ 2ຂໍ້ທີ່ຖາມກ່ຽວກັບຫົວຂໍ້ນີ້. ທັກສະໃນການຄຸ້ມ ຄອງຂອງຜູ້ເຂົ້າຮ່ວມໃນພາກປະຕິບັດຕົວຈິງກ່ຽວກັບຫົວຂໍ້ນີ້ຍັງຕ້ອງໄດ້ຍົກ ລະດັບເພີ່ມເຕີມໂດຍຜ່ານການ ຝຶກອົບຮົມໜ້າວຽກ(OJT).<br>
4) ພະນັກງານຈາກກະຊວງ ຜທ ຈຳນວນ 20 ທ່ານສາມາດເປັນຄູຝຶກກ່ຽວກັບ ບັນຫານີ້ໂດຍຜ່ານການຝຶກອົບຮົມສຳລັບຄູຝຶກໃນໄລ ຍະນີ້.<br>
5) ຫຼາຍກ່ວາ 80%ຂອງຈຳນວນຜູ້ເຂົ້າຮ່ວມໃຫ້ການຄຸ້ມຄອງການ ຝຶກອົບຮົມ ຢູ່ໃນລະດັບດີເຖິງດີເລີດ.<br>
<u>ຈຳນວນພະນັກງານຈາກກະຊວງຖືກຝຶກໃນໄລຍະ 3.</u>
<table>
<tr><th>ກົມປະ ເມີນຜົນ(DOE)</th><th>ກົມຮ່ວມມື ສາກົນ(DIC)</th><th>ກົມແຜນ ການDOP)</th><th>ກົມຈັດຕັ້ງພະນັກ ງານ(DOOP)</th><th>ລວມ</th></tr>
<tr><td>14 ທ່ານ</td><td>2 ທ່ານ</td><td>2 ທ່ານ</td><td>2 ທ່ານ</td><td>20 ທ່ານ</td></tr>
</table>
</td>
</tr>
</table>

(2) ທົບທວນການຈັດຕັ້ງປະຕິບັດໃນໄລຍະນີ້:

ບັນດາກິດຈະກຳເພື່ອບັນລຸໝາກຜົນທີ 4-1 ຕົວຢ່າງ: ກິດຈະກຳສ້າງຄວາມເຂັ້ມແຂງໃນການຄຸ້ມຄອງທຶນສົມທົບກັບ ODA ແມ່ນກຳລັງດຳເນີນໄປໄດ້ດ້ວຍດີ. ຕາຕະລາງຂ້າງລຸ່ມນີ້ແມ່ນສະຫຼຸບການ ບັນທຶກຂອງບັນດາກິດຈະກຳ.

ຕາຕະລາງ 7: ບັນທຶກກ່ຽວກັບກິດຈະກຳເພື່ອບັນລຸໝາກຜົນ 4-1

| ກິດຈະກຳ | ບັນທຶກ |
|---|---|
| 1. ສຶກສາການດຳເນີນ ການຄຸ້ມຄອງທຶນສົມທົບກັບ ODA, ການຄຸ້ມຄອງການລົງທຶນລັດຂັ້ນເມືອງ ແລະການຄຸ້ມຄອງແຜນງານ. | 1) ທີມງານໂຄງການໄດ້ແລກປ່ຽນແນວຄວາມຄິດກັບພະນັກງານທີ່ຮັບ ຜິດຊອບກ່ຽວກັບທຶນ ODA ສຳລັບການເລີ້ມຕົ້ນການສຶກສາຂັ້ນພື້ນຖານ.<br>2) ບົດບາດແລະໜ້າທີ່ຮັບຜິດຊອບຂອງກົມທີ່ກ່ຽວຂ້ອງກ່ຽວກັບ ODAໃນກະຊວງ ຜທ ແລະຂັ້ນຕອນການສະເໜີຂໍງົບປະມານການລົງທຶນລັດ/ທຶນ ODAແລະຂອງທຶນສົມທົບ ODAໄດ້ຖືກວິເຄາະ.<br>3) ບັນຫາທີ່ຍັງຄົງຄ້າງກ່ຽວກັບ ຂັ້ນຕອນການສະເໜີຂໍງົບປະມານແມ່ນໄດ້ຖືກຍົກຂຶ້ນ ແລະມາດຕະການແກ້ໄຂໄດ້ຖືກວິເຄາະ. |
| 2. ກວດສອບການດຳເນີນງານແລະຕາຕະລາງເວລາຂອງທຶນສົມທົບກັບ ODA ຂອງການຄຸ້ມຄອງການລົງ ທຶນລັດຂັ້ນເມືອງ ແລະ ການຄຸ້ມຄອງແຜນງານໃຫ້ສອດຄ່ອງກັບການ ສ້າງແຜນງົບປະມານປະຈຳປີ, ໄລຍະຍາວ,ເລີ່ມຕົ້ນທີ່ແຂວງອຸດົມໄຊ, ຄຳມ່ວນ ແລະ ສະຫວັນນະເຂດ | (ສຳເລັດແລ້ວ)<br>ຂັ້ນຕອນການສະເໜີຂໍງົບປະມານ,ທຶນສົມທົບກັບໂຄງການ ODA ກວດສອບໃນແຂວງອຸດົມໄຊ, ຄຳມ່ວນ, ສາລະວັນ ແລະ ບໍລິຄໄຊ. |
| 3) ປັບປຸງ "ຄູ່ມືສຳລັບການຄຸ້ມຄອງໂຄງການ(ຄູ່ມືລວມ) ແລະຄູ່ມືສຳລັບການຄຸ້ມຄອງແຜນງານການລົງທຶນລັດ"ເຊິ່ງໄດ້ແນໃສ່ການຄຸ້ມຄອງທຶນສົມທົບກັບໂຄງການ ODA, ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ ແລະ ການຄຸ້ມຄອງແຜນງານ.ນອກນັ້ນຍັງໄດ້ ພັດທະນາປຶ້ມຄູ່ມືສະເພາະສຳລັບຫົວຂໍ້ນີ້ ອີກ. | 1) ວົງຈອນຂອງ SPISແລະແບບຟອມແລະວົງ ຈອນການປະເມີນແບບປ່ຽບທຽບໄດ້ຖືກພັດທະນາ ແລະ ກໍ່ໄດ້ບັນຈຸລົງໃນປຶ້ມຄູ່ມືລວມ<br>2) ເນື້ອໃນຂອງປຶ້ມຄູ່ມືລວມຖືກປັບປຸງໂດຍອີງ ຕາມຜົນຂອງການຝຶກອົບຮົມໄລຍະທີ 3.<br>3) ບັນດາປຶ້ມຄູ່ມືສະເພາະແມ່ນຖືກກະກຽມໃນ ເດືອນສິງຫາ 2010. |
| 4. ຜະລິດ ແລະແຈກຢາຍປຶ້ມຄູ່ມືລວມ | (ຍັງບໍ່ທັນສຳເລັດບາງພາກສ່ວນ) |

| ກິດຈະກຳ | ບັນທຶກ |
|---|---|
| ແລະ ປຶ້ມຄູ່ມືສະເພາະໃຫ້ອົງການຈັດຕັ້ງລັດຖະບານທີ່ກ່ຽວຂ້ອງ. | 1) ປຶ້ມຄູ່ມືໂຄງການຄຸ້ມຄອງການລົງທຶນລັດໄດ້ ຖືກຍົກລະດັບຂຶ້ນໃນໄລຍະ2 ແລະ ກໍ່ໄດ້ຖືກປັບປຸງ ພາຍໃນໄລຍະທີ 3 ຂອງການຝຶກອົບຮົມ.<br>2) ປຶ້ມຄູ່ມືສະເພາະແມ່ນຖືກກະກຽມໃນໄລຍະທີ 3ແລະຈະຖືກແຈກຢາຍໃຫ້ບັນດາພະແນກການທີ ກ່ຽວຂ້ອງໃນການຄຸ້ມຄອງການລົງທຶນລັດໃນການຝຶກອົບຮົມໄລຍະທີ 4 ນີ້.<br>3) ມັນເປັນສິ່ງຈຳເປັນສຳລັບປຶ້ມຄູ່ມືລວມ ແລະສະເພາະໃນການຖືກຮັບຮອງຢ່າງເປັນທາງການ ໂດຍກະຊວງ ຜທ. |
| 5. ຊ່ວຍກະຊວງ ຜທ ໃນການພັດທະນາຫຼັກ ສູດແລະອຸປະກອນການຝຶກອົບຮົມ. | (ສຳເລັດ)<br>1)ເນື້ອໃນການຝຶກອົບຮົມສຳລັບສົກປີ 2009/10ແມ່ນໄດ້ຖືກກະກຽມແລະກໍ່ໄດ້ຖືກດັດແກ້, ສຳລັບ ການຝຶກອົບຮົມໃນສົກປີ 2010/11ພາຍໃຕ້ການ ຮ່ວມມືລະຫວ່າງຄູຝຶກຈາກກະຊວງ ຜທແລະຊ່ຽວ ຊານ JICA.<br>2) ຫຼັກສູດ, ເນື້ອໃນ, ບົດແນະນຳກ່ຽວກັບການຝຶກ ອົບຮົມໄດ້ຖືກພັດທະນາຂຶ້ນ. |
| 6. ຊ່ວຍກະຊວງ ຜທໃນການຈັດຝຶກອົບຮົມແລະຈັດກອງປະຊຸມປຶກສາຫາລືສຳລັບທຸກ ແຂວງແລະກະຊວງ(ການຈັດຕັ້ງປະຕິບັດກິດ ຈະກຳນີ້ແມ່ນດຳເນີນພ້ອມກັນກັບ ຂໍ້ 2-6) | (ສຳເລັດ)<br>ທຸກຂັ້ນຕອນການດຳເນີນການຄຸ້ມຄອງການຝຶກອົບຮົມໂດຍຜ່ານການກະກຽມ,ຈັດຕັ້ງປະຕິບັດແລະປະເມີນຜົນໄດ້ຖືກຈັດຕັ້ງປະຕິບັດພາຍໃຕ້ ການຮ່ວມມືຂອງຄູ່ຮ່ວມງານກໍ່ຄືພະນັກງານຈາກ ກະຊວງ ຜທ ແລະອົງການໄຈກາ |
| 7. ຊ່ວຍກະຊວງ ຜທ ໃນການຈັດຝຶກອົບຮົມໜ້າວຽກ(OJT)ຢູ່ທຸກໆແຂວງແລະກະຊວງ. | (ສຳເລັດ)<br>ພະນັກງານຈາກກະຊວງ ຜທ ໄດ້ຈັດຕັ້ງປະຕິບັດ ການຝຶກອົບຮົມໜ້າວຽກໃນທົ່ວປະເທດ.ເຊິ່ງໄດ້ ຮັບການຊ່ວຍເຫຼືອຈາກຊ່ຽວຊານໄຈກາ(JICA)ແລະທີ່ປຶກສາພາຍໃນຂອງໂຄງການຈາກເດືອນມີນາເຖິງເດືອນພຶດສະພາ 2010. |
| 8. ຊ່ວຍກະຊວງ ຜທໃນການປັບປຸງຄູ່ມືລວມ ແລະຄູ່ມືສະເພາະໂດຍອີງຕາມການຕອບຮັບຂອງບັນດາກິດຈະກຳ. | (ສຳເລັດ)<br>ຄູ່ຮ່ວມງານຢູ່ກະຊວງ ຜທ ພ້ອມກັບຊ່ຽວຊານ JICAໄດ້ປັບປຸງຄູ່ມືລວມແລະກະກຽມປຶ້ມຄູ່ມືສະເພາະໂດຍອີງຕາມບົດລາຍງານການປະເມີນຜົນຂອງການຝຶກອົບຮົມຂອງໄລຍະທີ 3. |

**(3) ສິ່ງສຳຄັນສຳລັບການຈັດຕັ້ງປະຕິບັດໃນໄລຍະຕໍ່ໄປ.**

ໜ້າວຽກທີ່ຍັງຄ້າງເພື່ອໃຫ້ບັນລຸໝາກຜົນທີ 4-1.

- ການເຮັດໃຫ້ປຶ້ມຄູ່ມືລວມແລະປຶ້ມຄູ່ມືສະເພາະມີຜົນສັກສິດ. ຈົນເຖິງປະຈຸບັນປຶ້ມຄູ່ມືໄດ້ຮັບການປັບປຸງຈຳນວນ 2 ຄັ້ງເຊິ່ງລວມທັງການເພີ່ມເຕີມພາກການຄຸ້ມຄອງທຶນສົມທົບກັບໂຄງການ ODA. ປຶ້ມຄູ່ມືສະເພາະໄດ້ຖືກກະກຽມຂຶ້ນເປັນຄັ້ງທຳອິດໃນເດືອນສິງຫາ 2010. ມັນເປັນສິ່ງສຳຄັນໃນການຮັບຮອງເອົາບັນດາປຶ້ມຄູ່ມືດັ່ງກ່າວໂດຍລັດຖະມົນຕີກະຊວງ ຜທ. ດັ່ງນັ້ນ, ວົງຈອນຂອງວຽກການຄຸ້ມຄອງແລະແບບຟອມ SPIS ໃຫ້ມີປະສິດຕິຜົນ.

➢ **ຍົກສູງທັກສະໃນພາກປະຕິບັດ ສຳລັບການຄຸ້ມຄອງທຶນລັດ**

ອີງຕາມການປະເມີນຜົນການຝຶກອົບຮົມໃນໄລຍະທີ 3, 60% ຫຼື 363 ໃນ 762 ທ່ານ ຈາກແຂວງ ແລະ 95% ຫຼື 72 ໃນ76 ທ່ານຈາກພາກກະຊວງ ສາມາດຕອບຄຳຖາມ 2 ຂໍ້ທີ່ກ່ຽວກັບການຄຸ້ມຄອງທຶນສົມທົບກັບໂຄງການ ODA ໃນບົດທົດສອບ. ອີງຕາມຄວາມຈິງດັ່ງກ່າວ, ລະດັບຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມຕໍ່ກັບຫົວຂໍ້ນີ້ແມ່ນສູງ. ແນວໃດກໍ່ຕາມມັນເປັນສິ່ງສຳຄັນສຳລັບເຂົາເຈົ້າຕ້ອງໄດ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ປະຕິບັດເຂົ້າໃນວຽກງານຕົວຈິງໂດຍການນຳໃຊ້ແບບຟອມ SPIS ສະເໜີຂໍງົບປະມານທຶນສົມທົບ. ດັ່ງນັ້ນ,ທັກສະໃນການຄູ້ມຄອງໃນພາກປະຕິບັດຂອງບັນ ດາຜູ້ເຂົ້າຮ່ວມກ່ຽວກັບຫົວຂໍ້ດັ່ງກ່າວແມ່ນ ຕ້ອງໄດ້ຍົກສູງຂຶ້ນຕື່ມໂດຍຜ່ານການຝຶກອົບຮົມ ແລະການຝຶກອົບຮົມໜ້າວຽກໃນໄລຍະທີ 4.

**ບັນດາກິດຈະກຳເພື່ອເສີມສ້າງຄວາມມີປະສິດທິຜົນຂອງໂຄງການ.**

➢ ການຊ່ວຍໃຫ້ວົງຈອນຂອງ SPIS ເປັນລະບົບສະຖາບັນ

ມັນເປັນຄວາມຄືບໜ້າທີ່ດີທີ່ບັນດາຄູ່ຮ່ວມງານຈາກກະຊວງ ຜທ ລວມທັງກົມຮ່ວມມືສາກົນເຫັນດີໃຫ້ກົມຮ່ວມມືສາກົນເປັນກຸນແຈສຳຄັນໃນວົງຈອນຂອງ SPIS ແລະການຄຸ້ມຄອງ.ໃນໄລຍະໜ້າໂຄງການມີຈຸດປະສົງແນໃສ່ການສະໜັບສະໜູນ ການກະກຽມ ການປະກອບຄຳຄິດຄຳເຫັນກ່ຽວກັບວົງຈອນຂອງ SPIS ທີ່ໄດ້ຖືກຮັບຮູ້ຢ່າງເປັນທາງການໂດຍການຮັບຮອງເອົາປຶ້ມຄູ່ມືລວມແລະປຶ້ມຄູ່ມືສະເພາະ ກໍ່ຄືດຳລັດເລກທີ 75 ກ່ຽວກັບທຶນ ODA. ກິດຈະກຳນີ້ຄວນຖືກຈັດຕັ້ງປະຕິບັດຢ່າງລະມັດລະວັງພ້ອມກັບມີການເຈລະຈາຢ່າງໃກ້ຊິດກັບຄູ່ຮ່ວມງານຈາກກະຊວງຜທ ນຳພາໂດຍ ດຣ. ບຸນທະວີ ສີສຸພັນທອງ ລັດຖະມົນຕີຊ່ວຍວ່າການກະຊວງ ຜທ.

➢ **ປະສານສົມທົບແບບຟອມທີ່ຄ້າຍຄືກັນຂອງໂຄງການອື່ນ.**

ການປະສານສົມທົບ ແລະເຮັດໃຫ້ເປັນເອກະພາບກັນກັບແບບຟອມຈາກໂຄງການອື່ນແມ່ນຄ່ອຍໆເພີ້ມຂຶ້ນ. ໂຄງການປັບປຸງຖານຂໍ້ມູທີ່ສະໜັບສະໜູນໂດຍອົງການສະຫະປະຊາຊາດເພື່ອການພັດທະນາ(UNDP NIM)ຢູ່ກົມຮ່ວມມືສາກົນໄດ້ເຫັນດີນຳໃຊ້ແບບຟອມ SPISໃນການເກັບກຳຂໍ້ມູນໃນມຸມມອງໄລຍະກາງແລະຍາວ. ດັ່ງນັ້ນ, ລະບົບຖານຂໍ້ມູນແມ່ນຖືກອອກແບບໂດຍອີງຕາມແບບຟອມ SPIS. ໂຄງການ PCAP2 ຈະສືບຕໍ່ການປະສານສົມທົບກັບໂຄງການອື່ນໆອີກ ເພື່ອເຮັດໃຫ້ແບບຟອມ ສປີດສ ມີປະສິດຕິພາບ ແລະ ປະສິດຕິຜົນ.ໂຄງການພີແຄັບ 2 ໄດ້

ຄາດຫວັງຢ່າງຍິ່ງວ່າຈະມີການປະສານງານທີ່ດີກັບທີ່ປຶກສາຂອງອົງການ ໄຈກາ ທີ່ຮັບຜິດຊອບກ່ຽວກັບການປະສານງານກັບຜູ້ໃຫ້ທຶນຊ່ວຍເຫຼືອ.

ຕາຕະລາງ 8 ສະຫຼຸບແບບຟອມຂອງ ODA ທີ່ຖືກໃຊ້ຢູ່ໃນກົມ DIC

| | ຊື່ | ຈຸດປະສົງ | ໃຜຂຽນ? | ກຳນົດເກັບກຳ/ສົ່ງ |
|---|---|---|---|---|
| 1 | ລາຍຊື່ທຶນODA | ລວບລວມປະຫວັດຫຍໍ້ຂອງທຸກໆໂຄງການ ODA | ບັນດາຂະແໜງການແຂວງ,ພຜທ ແລະ ກະຊວງ | ພາຍໃນເດືອນມັງກອນ |
| 2 | ແບບຟອມເກັບກຳຂໍ້ມູນໂຄງການPIS/ບົດລາຍງານຂໍ້ມູນໂຄງການPIR/PWP | ການກະກຽມຂໍ້ມູນໂຄງການໂດຍເຈົ້າຂອງໂຄງການ | ຜູ້ບໍລິຫານຂອງທຸກໆໂຄງການ ODA | ເດືອນທັນວາ - ເດືອນມັງກອນ |
| 3 | ບົດລາຍງານການຊ່ວຍເຫຼືອຈາກຕ່າງປະເທດ(FAR) | ການກະກຽມບົດລາຍງານການຊ່ວຍເຫຼືອຈາກຕ່າງປະເທດ( FAR ) | ຄູ່ຮ່ວມພັດທະນາ | ເດືອນທັນວາ - ເດືອນມັງກອນ |
| 4 | ແບບຟອມສປົດສ SPIS | 1) ຍື່ນຂໍທຶນລົງທຶນ 2) ເກັບກຳຂໍ້ມູນສຳລັບເປັນຖານຂໍ້ມູນ ODA | ບັນດາພະນັກງານແຂວງ,ພຜທ ແລະ ກະຊວງ | ເດືອນທັນວາ - ເດືອນກຸມພາ |

ແຫຼ່ງຂໍ້ມູນກະກຽມໂດຍ PCAP 2

- **ຂະຫຍາຍຈຳນວນປຶ້ມຄູຝຶກຈາກກົມຮ່ວມມືສາກົນ (DIC)**

ຄູ່ຮ່ວມງານໃນກົມຮ່ວມມືສາກົນໃນ DIC ໄດ້ໃຫ້ຄຳເຫັນວ່າກົມຮ່ວມມືສາກົນຄວນຈະເປັນຜູ້ຈັດຕັ້ງປະຕິບັດຕົ້ນຕໍໃນການຝຶກອົບຮົມກ່ຽວກັບຫົວຂໍ້ ODA .ໃນກອງປະຊຸມປຶກສາຫາລືກ່ຽວກັບການປັບປຸງຄູ່ມື ຄູ່ຮ່ວມງານໃນກະຊວງ ຜທ ໄດ້ຕົກລົງເຫັນດີໃຫ້ DIC ເປັນຜູ້ນຳພາຫຼັກໃນວົງຈອນ SPIS. ແນວໃດກໍ່ຕາມມີພຽງແຕ່ຄູ່ຝຶກ 2 ທ່ານເທົ່ານັ້ນມາຈາກ DIC ທີ່ເຂົ້າຮ່ວມອົບຮົມໃນໄລຍະທີ 3. ຄູຝຶກທັງ 2 ທ່ານດັ່ງກ່າວໄດ້ຮັບຜິດຊອບຝຶກອົບຮົມໃນທົ່ວປະເທດກ່ຽວກັບຫົວຂໍ້ທຶນລົງທຶນ ODA ສ່ວນຄູຝຶກຈາກ DOE ແລະ DOP ແມ່ນຮັບຜິດຊອບໃນໜ້າວຽກອື່ນ. ຄູຝຶກໃນໄລຍະ 3 ນີ້ເປັນຄູຝຶກທີ່ແກນຫຼັກຂອງການຝຶກອົບຮົມໃນໄລຍະຕໍ່ໄປ. ດ້ວຍເຫດນີ້, ທາງໂຄງການຄາດຫວັງຢ່າງຍິ່ງວ່າ DIC ຈະສົ່ງຈຳນວນຄູຝຶກເຂົ້າມາຮ່ວມກັບໂຄງການຫຼາຍຂຶ້ນໃນການຈັດຝຶກອົບຮົມໄລຍະທີ 4 ທີ່ຈະມາ.

**2.5.2 [ ໜ້າວຽກ 4.2 ] ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ.**

**(1) ຄາດຄະເນການບັນລຸໝາກຜົນທີ 4-2**

ດັ່ງທີ່ສະແດງໃນຕາຕະລາງລຸ່ມນີ້ ໝາກຜົນທີ 2 ແມ່ນມີຄວາມຄືບໜ້າດີ ແລະຄາດວ່າຈະບັນລຸຄາດໝາຍພາຍໃນເວລາສິ້ນສຸດໂຄງການ. ເນື້ອໃນກ່ຽວກັບການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງຢູ່ໃນປຶ້ມຄູ່ມືການຄຸ້ມຄອງໂຄງການພ້ອມກັບແບບຟອມສຳລັບໂຄງການຂອງເມືອງ/ກຸ່ມບ້ານພັດທະນາແມ່ນໄດ້ຖືກດັດແກ້ພາຍຫຼັງການໄດ້ຮັບ.

ຄຳຄິດຄຳເຫັນຈາກກະຊວງ ຜທ ແລະພະນັກງານຈາກແຂວງ ຮ່າງຂອງຄູ່ມືສະເພາະແມ່ນໄດ້ຖືກພັດທະນາຂຶ້ນ ມັນຈະຖືກແຈກຢາຍໄປສູ່ແຂວງແລະເມືອງແລະເຮັດໃຫ້ແຂງແກ່ນຂຶ້ນໂດຍຜ່ານການຝຶກອົບຮົມແລະການທັດສະນະສຶກສາໃນທ້າຍສົກປີຂອງໂຄງການ.

<u>ຕາຕະລາທີ 9 ການບັນລຸໝາກຜົນທີ 4-2</u>

| ໂຕຊີ້ວັດ | ການບັນລຸຜົນ |
|---|---|
| 4-2 "ປຶ້ມຄູ່ມືສຳລັບການຄຸ້ມຄອງໂຄງການລົງທຶນລັດ" ແລະປຶ້ມຄູ່ມືສະເພາະໄດ້ຮັບການປັບປຸງຫຼືພັດທະນາຂຶ້ນເຊິ່ງໄດ້ລວມເອົາ ພາກການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງເຂົ້ານຳ. ປຶ້ມຄູ່ມືດັ່ງກ່າວຈະຖືກອະນຸມັດ ແລະ ແຈກຢາຍໄຫ້ແກ່ບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ. | ການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງແມ່ນໄດ້ຖືກປັບປຸງໃນປຶ້ມຄູ່ມືການຄຸ້ມຄອງໂຄງການລົງທຶນລັດ(ຄູ່ມືລວມ).<br>ປຶ້ມຄູ່ມືສະເພາະສະບັບຮ່າງໄດ້ຖືກພັດທະນາຂຶ້ນແຕ່ຍັງຕ້ອງການໆປັບປຸງແລະເຮັດໃຫ້ແຂງແກ່ນຂຶ້ນຕື່ມ |

**(2) ທົບທວນການຈັດຕັ້ງປະຕິບັດ**

ບັນດາກິດຈະກຳເພື່ອໃຫ້ບັນລຸໝາກຜົນທີ 4-2 ແມ່ນໄດ້ດຳເນີນໄປຢ່າງມີຄວາມືບໜ້າຕາມແຜນ. ບັນດາກິດຈະກຳແລະຜົນໄດ້ສະແດງຢູ່ໃນຕາຕະລາງລຸ່ມນີ້.

<u>ຕາຕະລາງທີ 10 ກິດຈະກຳສຳລັບໝາກຜົນທີ 4-2</u>

| ກິດຈະກຳທີ່ວາງແຜນໄວ້ | ການບັນລຸຜົນ |
|---|---|
| 1) ສຶກສາກ່ຽວກັບວົງຈອນ ແລະ ລະດັບຄວາມສາມາດຂອງຫ້ອງການແຜນການ ແລະສະຖິຕິເມືອງ | **[ສຳເລັດແລ້ວ]** ໄດ້ລົງໄປສຶກສາຄວາມເຂົ້າໃຈກ່ຽວກັບວົງຈອນວຽກງານໃນປະຈຸບັນແລະບັນຫາກ່ຽວກັບການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງຢູ່ແຂວງອຸດົມໄຊແລະສາລະວັນ. ຜ່ານການສຶກສາໃຫ້ຮູ້ວ່າຍັງຂາດແຄນພະນັກງານທີ່ມີຄວາມສາມາດຖ້າທຽບໃສ່ກັບຄວາມຕ້ອງການໃນປະຈຸບັນ |

| | |
|---|---|
| 2) ວິເຄາະການແບ່ງປັນໜ້າທີ່ ຮັບຜິດຊອບທີ່ເໝາະສົມລະຫວ່າງ ພຜທ ແຂວງ ແລະຫ້ອງການແຜນການ ແລະ ສະຖິຕິເມືອງ | **[ສໍາເລັດແລ້ວ]** ໄດ້ມີການວິເຄາະໂດຍອີງຕາມວົງຈອນຂອງວຽກຈາກຂັ້ນເມືອງເຖິງຂັ້ນແຂວງ. ນອກນັ້ນຍັງໄດ້ສຶກສາເພີ່ມເຕີມກ່ຽວກັບການຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາຊົນນະບົດ ໂດຍອີງຕາມແຫຼ່ງຂໍ້ມູນຫຼາຍແຫ່ງ (ຕົວຢ່າງ: ກອງທຶນຫຼຸດຜ່ອນຄວາມທຸກຍາກ, ກອງທຶນພັດທະນາຊົນນະບົດ,ກອງທຶນຄູ່ຮ່ວມພັດທະນາ) |
| 3) ການພັດທະນາ/ປັບປຸງວິທີການແລະເຄື່ອງມືເຊິ່ງສະທ້ອນຢູ່ໃນປຶ້ມຄູ່ມືລວມ/ສະເພາະ. | **[ກໍາລັງດໍາເນີນຢູ່]** ວິທີການດໍາເນີນງານທີ່ເປັນມາດຕະຖານໄດ້ຖືກແນະ ນໍາຢູ່ໃນປຶ້ມຄູ່ມືແລະໄດ້ຖືກປັບປຸງໂດຍອີງຕາມການເກັບກໍາຄໍາຄິດຄໍາເຫັນຈາກການຝຶກອົບຮົມ ປຶ້ມຄູ່ມືສະເພາະສະບັບຮ່າງແມ່ນໄດ້ຖືກພັດທະ ນາຂຶ້ນ ປຶ້ມຄູ່ມືດັ່ງກ່າວຈະສໍາເລັດສົມບູນພາຍໃນເວລາທີ່ໂຄງການສໍາເລັດ |
| 4) ການພັດທະນາເນື້ອໃນການຝຶກອົບຮົມແລະການຝຶກອົບຮົມໜ້າວຽກ | **[ ສໍາເລັດແລ້ວ ]** ຊຸດການຝຶກອົບຮົມກ່ຽວກັບຫົວຂໍ້ນີ້ແມ່ນໄດ້ສໍາເລັດການກະກຽມແລະປັບປຸງ. |
| 5) ການຝຶກອົບຮົມສໍາລັບຄູຝຶກ | **[ ສໍາເລັດແລ້ວ ]** ການຝຶກອົບຮົມສໍາລັບຄູຝຶກເພື່ອກຽມໄປຈັດຝຶກອົບຮົມໄລຍະສຸດທ້າຍແມ່ນໄດ້ຖືກຈັດຂຶ້ນແລ້ວ. |
| 6) ການຮັບຮອງເອົາຂັ້ນຕອນ,ວິທີການ, ເຄື່ອງມືແລະການຝຶກອົບຮົມ. | **[ ກໍາລັງດໍາເນີນການ]** ການດໍາເນີນການຮັບຮອງເອົາຢ່າງເປັນທາງການແມ່ນຈະໄດ້ເຮັດຢູ່ປີສຸດທ້າຍຂອງໂຄງການຈຸດປະສົງເພື່ອປັບປຸງເນື້ອໃນຂອງຄູ່ມືສະເພາະ. |

**(3) ສິ່ງສໍາຄັນສໍາລັບປີທີ 4**

ໃນຖານະຢູ່ໃນຂັ້ນລັດຖະບານສູນກາງ ໂຄງການຈະສືບຕໍ່ປຶກສາຫາລືກັບບັນດາຜູ້ໃຫ້ທຶນແລະອົງການໃຫ້ທຶນພາຍໃນ ເພື່ອຄວາມເປັນເອກະພາບທາງແນວທາງແລະແບບຟອມຂໍງົບປະມານ ເຖິງແມ່ນວ່າຈັນຈະຍາກໃນການເຮັດໃຫ້ການດໍາເນີນງານເປັນເອກະພາບກັນ.ທາງໂຄງການຈະສືບຕໍ່ສົ່ງເສີມແນວທາງດັ່ງກ່າວໃຫ້ສອດຄ່ອງກັບສົນທິສັນຍາວຽງຈັນ. ສໍາລັບໂຄງການຂັ້ນແຂວງ ທາງໂຄງການຈະເຮັດໃຫ້ປຶ້ມຄູ່ຖືກນໍາໃຊ້ໄດ້ ເພື່ອການປັບປຸງທີ່ດີຂຶ້ນ. ໂຄງການຈະເຮັດປຶ້ມຄູ່ມືສະເພາະດັ່ງກ່າວກ່ອນໂຄງການຈົບ.

**2.5.3 [ ໝາກຜົນທີ 4-3 ] ການຄຸ້ມຄອງແຜນການ.**

**(1) ຄາດຄະເນການບັນລຸໝາກຜົນທີ 4-3**

ດັ່ງທີ່ໄດ້ສະແດງໃນຕາຕະລາງລຸ່ມນີ້, ບັນດາກິດຈະກໍາທີ່ປະຕິບັດເພື່ອບັນລຸໂຕຊີ້ວັດ ຂອງໝາກຜົນທີ 4-2 ແລະ 4-3 ແມ່ນ ກໍາລັງດໍາເນີນໄປໄດ້ດ້ວຍດີ ແລະຄາດວ່າຈະບັນລຸຄາດໝາຍພາຍໃນເວລາໂຄງການສໍາເລັດ. ປຶ້ມຄູ່ມືການຄຸ້ມຄອງແຜນງານແມ່ນໄດ້ຮັບການປັບປຸງເຊິ່ງໄດ້ລວມເອົາເນື້ອໃນໃໝ່ ກໍລະນີສຶກສາ ກ່ຽວກັບເຄືອຈຸດປະສົງແຜນງານ(POT), ຕາຕະລາງລໍາດັບແລະແຜນທີ່ໂຄງການລົງທຶນລັດໃນ 3 ແຂວງທົດລອງ. ໃນການສຶກສາສະແດງໃຫ້ເຫັນປະເດັນ

ສຳຄັນສຳລັບການສ້າງແຜນພັດທະນາເສດ ຖະກິດສັງຄົມ 5 ປີ (SEDP’s) 2010-2015 ໃຫ້ແຂວງ ແກ່ນຂຶ້ນ. ປື້ມຄູ່ມືໄດ້ຖືກແຈກຢາຍໃຫ້ບັນດາພາກສ່ວນທີ່ກ່ຽວຂ້ອງໃນເວລາຝຶກອົບຮົມໃນຊ່ວງ ເດືອນພະຈິກປີ 2009 ຫາເດືອນທັນວາ 2010. ອີງຕາມການປະເມີນຜົນການອົບຮົມປື້ມຄູ່ມື ດັ່ງກ່າວຖືກປັບປຸງແລະປື້ມຄູ່ມືສະເພາະກ່ຽວກັບຫົວຂໍ້ດັ່ງກ່າວໄດ້ຖືກກະກຽມໃນເດືອນສິງຫາປີ 2010.

<u>ຕາຕະລະ 11 ການບັນລຸໝາກຜົນທີ 4-3</u>

<table>
<tr><th>ໂຕຊີ້ວັດ</th><th>ການບັນລຸຜົນ</th></tr>
<tr><td>4-2 “ ປື້ມຄູ່ມືການຄຸ້ມຄອງແຜນງານ ” ໄດ້ຖືກຍົກລະດັບ, ອະນຸມັດ ແລະແຈກຢາຍເຖິງອົງການຈັດຕັ້ງທີ່ກ່ຽວຂ້ອງໃນການຄຸ້ມຄອງແຜນງານການລົງທຶນລັດ.</td><td>(ບັນລຸແລ້ວ ຍັງແຕ່ການຮັບຮອງເອົາປື້ມຄູ່ມື)<br>1) ປື້ມຄູ່ມືການຄຸ້ມຄອງແຜນງານແມ່ນໄດ້ຖືກຍົກລະດັບໂດຍລວມເອົາກໍລະນີສຶກສາຂອງເຄື່ອງມືການຄຸ້ມຄອງແຜນງານ.<br>2) ປື້ມຄູ່ມືຖືກປັບປຸງໂດຍອີງຕາມຜົນຂອງການຝຶກອົບຮົມແລະຜົນຂອງການຝືອົບຮົມໜ້າວຽກ<br>3) ປື້ມຄູ່ມືຕ້ອງການໆຮັບຮອງເອົາຢ່າງເປັນທາງການ.</td></tr>
<tr><td>4.3 ພະນັກງານກະຊວງ ຜທ ຫຼາຍກ່ວາ 20 ທ່ານ ແລະພະ ນັກງານຂອງແຕ່ລະແຂວງ, ກະຊວງ,ອົງການຈັດຕັ້ງທີ່ກ່ຽວ ຂ້ອງຫຼາຍກ່ວາ 5 ທ່ານ ສາ ມາດຄຸ້ມຄອງການລົງທຶນລັດໃຫ້ສອດຄ່ອງກັບປື້ມຄູ່ມືລວມ ແລະ ປື້ມຄູ່ມືສະເພາະທີ່ໄດ້ ຖືກປັບປຸງໃໝ່ ຫຼືຍົກລະດັບ ແລະຍັງສາມາດຝຶກອົບຮົມໃຫ້ພະນັກງານທີ່ກ່ຽວຂ້ອງຂັ້ນແຂວງແລະເມືອງ.</td><td>(ພາກສ່ວນທີ່ກ່ຽວກັບຄວາມສາມາດຂອງຝຶກແມ່ນໄດ້ບັນລຸແຕ່ຄວາມສາມາດໃນການຄຸ້ມຄອງການຝຶກອົບຮົມ ຄວນຈະໄດ້ຖືກ ຍົກລະດັບຕື່ມ)<br>1)ໃນທ້າຍເດືອນມັງກອນ 2010 ການຝຶກອົບຮົມກ່ຽວກັບການ ຄຸ້ມຄອງການລົງທຶນລັດໄລຍະທີ 3)ໄດ້ຖືກຈັດຕັ້ງປະຕິບັດຈາກເດືອນພະຈິກ 2009 ຫາເດືອນກຸມພາ 2010 ຈຳນວນຂອງພະ ນັກງານທີ່ເຂົ້າຮ່ວມຝຶກອົບຮົມໄດ້ຖືກສັງລວມໃນຕາຕະລາດັ່ງລຸ່ມ ນີ້:<br>ຈຳນວນຂອງຜູ້ເຂົ້າຮ່ວມຝຶກອົບຮົມສົກປີ 2009-2010<table><tr><th>ອົງການທີ່ຂຶ້ນກັບ</th><th>ຈຳນວນພະນັກງານທີ່ຖືກຝຶກ</th></tr><tr><td>ກະຊວງ ຜທ</td><td>20 ທ່ານ(ໄດ້ຮັບການຝຶກໃຫ້ເປັນຄູຝຶກ)</td></tr><tr><td>ພຜທ ແຂວງ</td><td>204 ທ່ານ</td></tr><tr><td>ບັນດາກະຊວງແລະ ອົງການຈັດຕັ້ງກ່ຽວຂ້ອງຕ່າງໆ</td><td>558 ທ່ານ</td></tr><tr><td>ບັນດາເຈົ້າຂອງໂຄງການຂັ້ນແຂວງ</td><td>108 ທ່ານ</td></tr><tr><td>ລວມ</td><td>801 ທ່ານ</td></tr></table>2) 93% ຫຼື 642 ໃນ 762 ທ່ານ ຈາກແຂວງແລະ 87% ຫຼື 66 ໃນ 76 ທ່ານຈາກກະຊວງຕອບແບບທົດສອບທີ່ສະແດງໃຫ້ເຫັນເຖິງຄວາມຮູ້ກ່ຽວກັບການຄຸ້ມຄອງການລົງທຶນລັດໄດ້ຮັບການພັດທະ ນາໂດຍຜ່ານການຝຶກອົບຮົມ.</td></tr>
</table>

3) 60% ຫຼື 363 ໃນ 762 ທ່ານຈາກແຂວງ ແລະ 95% ຫຼື 72 ໃນ 76 ທ່ານຈາກກະຊວງສາມາດຕອບຄຳຖາມ 2ຂໍ້ທີ່ຖາມກ່ຽວກັບຫົວຂໍ້ນີ້. ທັກສະໃນການຄຸ້ມຄອງຂອງຜູ້ເຂົ້າຮ່ວມໃນພາກປະຕິບັດຕົວຈິງກ່ຽວກັບຫົວຂໍ້ນີ້ຍັງຕ້ອງໄດ້ຍົກລະດັບເພີ່ມເຕີມໂດຍຜ່ານການ ຝຶກອົບຮົມໜ້າວຽກ(OJT).

4) ພະນັກງານຈາກກະຊວງ ຜທ ຈຳນວນ 20 ທ່ານສາມາດເປັນຄູຝຶກກ່ຽວກັບບັນຫານີ້ໂດຍຜ່ານການຝຶກອົບຮົມສຳລັບຄູຝຶກໃນໄລ ຍະນີ້.

5) ຫຼາຍກ່ວາ 80% ຂອງຈຳນວນຜູ້ເຂົ້າຮ່ວມໃຫ້ການຄຸ້ມຄອງການ ຝຶກອົບຮົມຢູ່ໃນລະດັບດີເຖິງດີເລີດ.

<u>ຈຳນວນພະນັກງານຈາກກະຊວງຖືກຝຶກໃນໄລຍະ 3</u>.

| ກົມປະເມີນຜົນ(DOE) | ກົມຮ່ວມມືສາກົນ(DIC) | ກົມແຜນການDOP) | ກົມຈັດຕັ້ງພະນັກງານ(DOOP) | ລວມ |
|---|---|---|---|---|
| 14 ທ່ານ | 2 ທ່ານ | 2 ທ່ານ | 2 ທ່ານ | 20 ທ່ານ |

**(2) ທົບທວນການຈັດຕັ້ງປະຕິບັດ.**

ບັນດາກິດຈະກຳເພື່ອເຮັດໃຫ້ບັນລຸໝາກຜົນ 4-3 ຕົວຢ່າງ: ກິດຈະກຳເຮັດໃຫ້ການຄຸ້ມຄອງແຜນງານແຂງແກ່ນຂຶ້ນແມ່ນດຳເນີນໄປໄດ້ດີແລະຢູ່ໃນລະຫວ່າງການຂອງຜົນສຳເລັດ.ຕາຕະລາລຸ່ມນີ້ແມ່ນສະຫຼຸບບົດບັນທຶກຂອງບັນດາກິດຈະກຳ.ບັນດາກິດຈະກຳດັ່ງກ່າວແມ່ນແນໃສ່ການແນະນຳກໍລະນີສຶກສາຂອງເຄື່ອງມືການຄຸ້ມຄອງແຜນງານໃນ 3 ແຂວງທົດລອງ ເພື່ອສະໜອງບົດຮຽນທີ່ເປັນຜົນປະໂຫຍດ. ສຳເລັດການສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຂອງແຕ່ລະຂະແໜງການຂອງລັດໃນ ສ ປ ປ ລາວ.

<u>ຕາຕະລາ 12 ບັນທຶກບັນດາກິດຈະກຳເພື່ອບັນລຸໝາກຜົນທີ 4-3</u>

| ກິດຈະກຳ | ບັນທຶກ |
|---|---|
| 1. ສຶກສາການດຳເນີນ ການຄຸ້ມຄອງທຶນສົມທົບກັບ ODA,ການຄຸ້ມ ຄອງການລົງທຶນລັດຂັ້ນເມືອງແລະການຄຸ້ມ ຄອງແຜນງານ. | (ສຳເລັດແລ້ວ)<br>ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5 ປີດ, ແຜນພັດ ທະນາຂອງຂະແໜງການ. ຕົວຢ່າງແຜນພັດທະນາຂະແໜງ ການອື່ນໆຂອງ 3 ແຂວງທົດລອງ ແລະແຜນດຳເນີນງານແຫ່ງ ຊາດໄດ້ຖືກວິເຄາະເປັນໂຄງຮ່າງ. |
| 2.ກວດສອບການດຳ ເນີນງານແລະຕາຕະ ລາງເວລາຂອງທຶນສົມ ທົບກັບ ODA ຂອງການຄຸ້ມຄອງການລົງ ທຶນລັດຂັ້ນເມືອງແລະ ການຄຸ້ມຄອງແຜນງານໃຫ້ສອດຄ່ອງກັບການ ສ້າງແຜນ | (ສຳເລັດແລ້ວ)<br>1) ການສຶກສາເບື້ອງຕົ້ນໄດ້ຖືກຈັດຕັ້ງປະຕິບັດເພື່ອຄັດເລືອກຂະແໜງການຕົວຢ່າງ.<br>2) ການວິເຄາະແນວໂຄງການຂອງແຜນພັດທະນາ 5 |

| ກິດຈະກຳ | ບັນທຶກ |
|---|---|
| ງົບປະມານປະຈຳປີ,ໄລຍະຍາວ,ເລີ່ມຕົ້ນທີ່ ແຂວງອຸດົມໄຊ,ຄຳມ່ວນແລະສະຫວັນນະເຂດ | ປີຂອງຂະແໜງການຕົວຢ່າງໃນ 3ແຂວງທົດລອງ ໄດ້ຖືກຈັດຕັ້ງປະຕິບັດ.<br>3) ກຳລະນີສຶກສາຂອງເຄື່ອງມືການຄຸ້ມຄອງໂຄງການ ແຜນງານໃນຂະແໜງການຕົວຢ່າງຂອງ 3 ແຂວງ ທົດລອງ<br>ປະເດັນກ່ຽວກັບແຜນພັດທະນາໄດ້ຖືກຍົກຂຶ້ນໂດຍ ການວິເຄາະທີ່ກ່າວມາຂ້າງເທິງ. |
| 3) ປັບປຸງ"ຄູ່ມືສຳລັບການຄຸ້ມຄອງໂຄງການ (ຫົວໃຫຍ່)"ແລະຄູ່ມືສຳລັບການຄຸ້ມຄອງແຜນ ງານການລົງທຶນລັດ"ເຊິ່ງໄດ້ແນໃສ່ການຄຸ້ມຄອງ ທຶນສົມທົບກັບໂຄງການODA, ການຄຸ້ມຄອງ ໂຄງການລົງທຶນລັດຂັ້ນເມືອງແລະການຄຸ້ມຄອງ ແຜນງານ.ນອກນັ້ນຍັງໄດ້ ພັດທະນາປື້ມຄູ່ມືສະ ເພາະສຳລັບຫົວຂໍ້ນີ້ ອີກ. | (ສຳເລັດແລ້ວ)<br>1) –ເຄື່ອງມືການຄຸ້ມຄອງແຜນງານແລະສິ່ງທ້າທາຍ ຕ່າງໆແມ່ນໄດ້ລວມຢູ່ໃນປື້ມຄູ່ມືການຄຸ້ມຄອງ ແຜນງານສະ ບັບປັບປຸງຄັ້ງທີ 2.<br>2) ປື້ມຄູ່ມືຖືກປັບປຸງໂດຍອີງຕາມຜົນຂອງການຝຶກ ອົບຮົມ ໄລຍະທີ 3 |
| 4. ຜະລິດແລະແຈກຢາຍປື້ມຄູ່ມືລວມແລະ ປື້ມຄູ່ມືສະເພາະໃຫ້ອົງການລັດຖະບານທີ່ກ່ຽວ ຂ້ອງ. | (ສຳເລັດບາງສ່ວນ)<br>1) ປື້ມຄູ່ມືໄດ້ຮັບການຍົກລະດັບໃນໄລຍະທີ 2ແລະ ຖືກປັບປຸງໃນໄລຍະທີ 3 ຂອງການຝຶກອົບຮົມ.<br>2) ປື້ມຄູ່ມືຕ້ອງການຮັບຮອງຈາກກະຊວງ ຜທ. |
| 5. ຊ່ວຍກະຊວງ ຜທ ໃນການພັດທະນາຫຼັກ ສູດ ແລະອຸປະກອນການຝຶກອົບຮົມ. | (ສຳເລັດແລ້ວ)<br>ຫຼັກສູດ,ເນື້ອໃນ,ບົດແນະນຳໃນການຝຶກອົບຮົມແມ່ນ ຖືກພັດ ທະນາຂຶ້ນພາຍໃຕ້ການຮ່ວມມືລະຫວ່າງຄູ່ຮ່ວມ ງານຢູ່ກະ ຊວງ ຜທ ແລະຊ່ຽວຊານໄຈກາ. |
| 6. ຊ່ວຍກະຊວງ ຜທໃນການຈັດຝຶກອົບຮົມແລະ ຈັດກອງປະຊຸມປຶກສາຫາລືສຳລັບທຸກ ແຂວງ ແລະກະຊວງ(ການຈັດຕັ້ງປະຕິບັດກິດ ຈະກຳນີ້ ແມ່ນດຳເນີນພ້ອມກັນກັບ ຂໍ້ 2-6) | (ສຳເລັດແລ້ວ)<br>ທຸກໆການດຳເນີນການຄຸ້ມຄອງການຝຶກອົບ ຮົມ,ຕົວຢ່າງການກະກຽມ,ການຈັດຕັ້ງປະຕິບັດແລະ ການປະເມີນຜົນແມ່ນຮັບຜິດຊອບໂດຍຄູ່ຮ່ວມງານ ຈາກກະຊວງ ຜທ ແລະ ຊ່ຽວຊານໃຈກາ. |
| 7. ຊ່ວຍກະຊວງ ຜທ ໃນການຈັດຝຶກອົບຮົມໜ້າ ວຽກ(OJT)ຢູ່ທຸກໆແຂວງແລະກະຊວງ. | (ສຳເລັດແລ້ວ)<br>ຄູ່ຮ່ວມງານຈາກກະຊວງ ຜທ ຈັດຕັ້ງປະຕິບັດການຝຶກ ອົບຮົມໜ້າວຽກຮ່ວມກັບຊ່ຽວຊານໄຈກາແລະທີ່ປຶກສາ ພາຍໃນຂອງໂຄງການເລີ່ມແຕ່ເດືອນມີນາຫາເດືອນ ພຶດສະພາ, 2010. |
| 8. ຊ່ວຍກະຊວງ ຜທ ໃນການຈັດຕັ້ງການປະ ເມີນຜົນຂອງການປະເມີນແລະປະເມີນຜົນ ຂອງໂຄງ ການພ້ອມທັງກວດກາໂຕຊີ້ວັດໃນ | (ສຳເລັດບາງສ່ວນ)<br>ການປະເມີນຜົນຂອງການປະເມີນໄດ້ຈັດຕັ້ງຂຶ້ນຕັ້ງແຕ່ ເດືອນ ກໍລະກົດ 2010 ປະຈຸບັນນີ້ຜົນຂອງການປະ |

| ກິດຈະກຳ | ບັນທຶກ |
| --- | --- |
| ແຜນງານຂອງຂະແໜງການໃດໜຶ່ງ. | ເນີນຍັງຢູ່ໃນຂັ້ນ ຕອນການວິເຄາະ. |
| 9. ຊ່ວຍກະຊວງ ຜທ ໃນການປັບປຸງຄູ່ມືລວມ ແລະຄູ່ມືສະເພາະໂດຍອີງຕາມການຕອບຮັບຂອງບັນດາກິດຈະກຳ. | (ສຳເລັດແລ້ວ)<br>ຄູ່ຮ່ວມງານຈາກກະຊວງ ຜທ ໄດ້ປັບປຸງຄູ່ມືການຄຸ້ມຄອງແຜນງານ ພ້ອມກັບການຊ່ວຍເຫຼືອຂອງຊ່ຽວຊານໄຈກາ (JICA) ອີງຕາມຜົນຂອງການຝຶກອົບຮົມໄລຍະທີ 3. |

**(3) ສິ່ງສຳຄັນສຳລັບໄລຍະຕໍ່ໄປ**

ເຖິງແມ່ນວ່າການຄຸ້ມຄອງແຜນງານບໍ່ແມ່ນຫົວຂໍ້ທີ່ໃໝ່ເລີຍສຳລັບການຝຶກອົບຮົມ ແຕ່ປະເດັນທີ່ຍັງຄົງຄ້າງກ່ຽວກັບຫົວຂໍ້ນີ້ແມ່ນອັດຕາສ່ວນການຕອບຄຳຖາມຖືກໃນ 2 ຄຳຖາມກ່ຽວກັບແມ່ນຍັງຕໍ່າຖ້າທຽບໃສ່ຫົວຂໍ້ອື່ນ. ໂດຍສະເພາະແມ່ນການເຂົ້າໃຈເຖິງຮູບແບບຂອງແຜນງານ ແລະ ເຄື່ອງການຄຸ້ມຄອງແຜນງານມີ 3 ຢ່າງຍັງບໍ່ທັນພຽງພໍ. ອີງຕາມຄວາມເປັນຈິງດັ່ງກ່າວນີ້ ການຝຶກອົບຮົມຄັ້ງຕໍ່ໄປຈະລວມເອົາປັດໃຈລຸ່ມນີ້:

1) ການນຳໃຊ້ຄຳສັບ: ປຶ້ມຄູ່ມືການຄຸ້ມຄອງແຜນງານໄດ້ລວມເອົາບັນດາຄຳສັບເຕັກນິກທີ່ຄ້າຍຄືກັນເຊິ່ງມັກເຮັດໃຫ້ຜູ້ອ່ານເກີດຄວາມສັບສົນ. ດັ່ງນັ້ນ ການນຳໃຊ້ຄຳສັບຢູ່ໃນປຶ້ມຄູ່ມືແລະເອກະ ສານການຝຶກອົບຮົມສຳລັບໄລຍະໜ້າແມ່ນໄດ້ຖືກດັດແກ້ແລ້ວ. ໂຄງການຄວນສິ່ງເສີມໃຫ້ຄູເຂົ້າໃຈໃນຈຸດນີ້ຕື່ມ.

2) ການໃຊ້ຮູບພາບ: ການຄຸ້ມຄອງແຜນງານແມ່ນມີຫຼາຍຮູບແບບ ເປັນໂຄງສ້າງແລະບໍ່ຄຸ້ນເຄີຍສຳລັບຜູ້ເຂົ້າຮ່ວມຝຶກອົບຮົມໃໝ່. ຄວນຈະນຳໃຊ້ຮູບພາບມາອະທິບາຍເພື່ອສ້າງຄວາມເຂົ້າໃຈໃຫ້ແກ່ຜູ້ເຂົ້າຮ່ວມຝຶກອົບຮົມຕື່ມ.

**(4) ບົດຝຶກຫັດກ່ຽວກັບການສ້າງເຄືອງຈຸດປະສົງແຜນງານ:** ບົດຝຶກຫັດໃນການຝຶກອົບຮົມໄລຍະທີ 3 ນີ້ແມ່ນແນໃສ່ເພື່ອໃຈ້ແຍກແຜນງານໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ສະບັບປະຈຸບັນໂດຍຜ່ານການສ້າງເຄືອຈຸດປະສົງແຜນງານ. ການສ້າງ POT ແມ່ນຈຸດປະສົງຫຼັກຂອງການເຮັດບົດຝຶກຫັດແລະຄວາມເຂົ້າໃຈຂອງຜູ້ເຂົ້າຮ່ວມ ບໍ່ສາມາດໃຈ້ແຍກຄວາມແຕກຕ່າງລະຫວ່າງແຜນຕົວຈິງກັບໂຄງສ້າງຂອງແຜນງານ. ດັ່ງນັ້ນ ການຝຶກອົບຮົມຄັ້ງຕໍ່ໄປ ໂຄງການຈະພະຍາຍາມເຮັດໃຫ້ຜູ້ເຂົ້າຮ່ວມເຂົ້າໃຈກ່ຽວກັບໂຄງສ້າງຂອງແຜນງານໃຫ້ເລິກເຊິ່ງຂຶ້ນກ່ວາເກົ່າ ໂດຍການພັດທະນາ POTເຂົ້າໃນການປະເມີນແບບປຽບທຽບ.

**3. ຄວາມຄືບໜ້າໃນການບັນລຸຈຸດປະສົງຂອງໂຄງການ.**

ຈຸດປະສົງຂອງໂຄງການແມ່ນມີດັ່ງຕໍ່ໄປນີ້: " ກະຊວງ ຜທ ແລະ ພຜທແຂວງດຳເນີນໂຄງການລົງທຶນລັດໂດຍຜ່ານຂັ້ນຕອນການປະເມີນທີ່ຖືກແນະນຳໂດຍໂຄງການພາຍໃຕ້ເພດານງົບປະມານແລະມີການຕິດຕາມກວດກາແລະປະເມີນຜົນ" ໂຄງການ PCAP2 ໄດ້ພັດທະນາເຄື່ອງມື, ວິທີການແລະຂັ້ນຕອນການກະກຽມການຝຶກອົບຮົມໄລຍະສຸດທ້າຍ ແລະຈະມີການຕິດຕາມກວດກາຂັ້ນຕອນການຍື່ນສະເໜີງົບປະມານປະຈຳປີ 2011/12 ນີ້. ເຖິງແມ່ນວ່າບັນດາໝາກຜົນຂອງໂຄງການມີຄວາມຄືບໜ້າດີໃນການບັນລຸຄາດໝາຍຂອງແຕ່ລະໝາກຜົນ,ການບັນລຸໂຕຊີ້ວັດສຳລັບຈຸດປະສົງຂອງໂຄງການແມ່ນຂຶ້ນກັບການຈັດຕັ້ງປະຕິບັດຂອງກະຊວງ ຜທ ແລະ ພຜທແຂວງ ກໍ່ຄືພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງການລົງທຶນລັດໃນຂັ້ນຕອນສະເໜີຂໍງົບປະມານການລົງທຶນລັດປະຈຳສົກປີ 2011/12. ດັ່ງນັ້ນ ການບັນລຸໂຕຊີ້ວັດຂອງຈຸດປະສົງຂອງໂຄງການແມ່ນຍັງບໍ່ສາມາດຮັບປະກັນໄດ້ຈົນກ່ວາຂັ້ນຕອນການສະເໜີຂໍງົບປະມານດັ່ງກ່າວໄດ້ຖືກຕິດຕາມກວດກາ.

ໂຕຊີ້ວັດແລະລະດັບການບັນລຸຜົນໃນປະຈຸບັນແມ່ນສະແດງຢູ່ໃນຕາຕະລາງລຸ່ມນີ້:

<u>ຕາຕະລາ 13 ລະດັບການບັນລຸໂຕຊີ້ວັດຂອງຈຸດປະສົງຂອງໂຄງການ</u>

| **ໂຕຊີ້ວັດຂອງຈຸດປະສົງໂຄງການ** | **ການບັນລຸຜົນ/ຄາດວ່າຈະບັນລຸຜົນ** |
|---|---|
| ເພດານງົບປະມານ<br>ເປີເຊັນຂອງໂຄງການລົງທຶນພາຍໃນ ແລະໂຄງການທຶນສົມທົບ ODA ທີ່ໄດ້ຮັບການປະເມີນ ກວດກາ ແລະປະເມີນຜົນພາຍໃນເພດານງົບປະມານ ພ້ອມກັບຕາຕະລາງງົບປະມານສະເພາະແມ່ນເພີ້ມຂຶ້ນເຖິງ 100% ກ່ອນໂຄງການ PCAP2 ສິ້ນສຸດລົງ | <u>**[ຈະຕ້ອງໄດ້ກວດກາຄືນອີກ]**</u> ໂຄງການ PCAP2 – ໄດ້ສ້າງຂັ້ນຕອນການສະເໜີງົບປະມານການລົງ ທຶນລັດທີ່ເປັນມາດຕະຖານຂຶ້ນ ແລະໄດ້ເຜີຍແຜ່ໂດຍຜ່ານປຶ້ມຄູ່ມື ແລະການຝຶກອົບຮົມທົ່ວປະເທດ ກະຊວງ ຜທ ແລະໂຄງການ PCAP2ແມ່ນກຳລັງສັງລວມຜົນ ການສະເໜີຂໍງົບປະມານການລົງທຶນລັດສຳລັບສົກປີ 2010/11. ຈາກການສຶກສາເບື້ອງຕົ້ນ –ແລະການສຳພາດພະນັກງານແຂວງ ຍັງບໍ່ສາມາດບັນລຸເຖິງ 100%ເທື່ອ.ທາງໂຄງການຈະສືບຕໍ່ການຈັດຝຶກອົບຮົມແລະໃຫ້ຄຳແນະນຳແກ່ບັນດາແຂວງກ່ຽວກັບຈຸດປະສົງຂອງການບັນລຸຜົນ(ຖ້າບໍ່ບັນລຸໄດ້ກໍ່ໃຫ້ໃກ້ຄຽງ)100%ໃນການຍື່ນສະເໜີໃຫ້ກົງເວລາໃນການສະເໜີຂໍງົບປະມານປະຈຳປີ 2011/12. |
| ບົດລາຍງານສຳລັບທຸກໆໂຄງການລົງທຶນພາຍໃນແຕ່ລະຂັ້ນຕອນ(ການວາງແຜນ/ປະເມີນ,ກວດກາປະເມີນຜົນ)ໄດ້ຮັບການປັບປຸງ. | <u>**[ບັນລຸເຄິ່ງໜຶ່ງ]**</u> ທາງໂຄງການໄດ້ປັບປຸງແບບຟອມບົດລາຍງານທີ່ຍື່ນໂດຍເຈົ້າຂອງໂຄງການ. ໂຄງການກໍ່ໄດ້ລວມເອົາພາກນີ້ງໃນບົດລາຍງານທີ່ສະແດງເຖິງບົດບາດແລະໜ້າທີ່ຂອງເຈົ້າຂອງໂຄງການ. |

| | |
|---|---|
| | ກະຊວງຜທ ແລະໂຄງການPCAP2ກຳລັງສັງລວມ ຜົນຂອງການຍື່ນສະເໜີຂໍງົບປະມານປີ 2010/11. ຈາກການສຶກສາເບື້ອງຕົ້ນແລະການສຳພາດພະນັກ ງານແຂວງການຍື່ນບົດລາຍງານແມ່ນໄດ້ຮັບການປັບ ທາງດ້ານຄຸນນະພາບແລະປະລິມານ. |
| ກະຊວງຜທ ແລະ ພຜທ ກຳນົດແລະຈັດຕັ້ງປະຕິບັດເພດານງົບປະມານຢູ່ຂັ້ນສູນກາງແລະແຂວງພ້ອມກັບກະຊວງການເງິນແລະກະຊວງການຕ່າງປະເທດ. | **[ບັນລຸເຄິ່ງໜຶ່ງ]** ມາດຖານງົບປະມານການລົງທຶນລັດ ໄດ້ອະນຸມັດຈາກສະພາແຫ່ງຊາດໃນເດືອນມິຖຸນາ 2010 ແຕ່ມັນຈຳເປັນຕ້ອງມີການຕິດຕາກວດກາ ດັ່ງ ນັ້ນ ເພດານງົບປະມານໄດ້ຖືກແຈ້ງໃນເວລາທີ່ເໝາະສົມ.<br>ໂຄງການຈະໄດ້ປຶກສາຫາລືກັບກົມປະເມີນຜົນຕື່ມອີກສຳລັບການແຈ້ງມາດຖານງົບປະມານໃນການສະເໜີຂໍງົບປະມານປະຈຳປີ 2011/12. |
| ມູນຄ່າແລະອັດຕາສ່ວນໜີ້ປະຈຳປີແມ່ນຫຼຸດລົງ | **[ຕ້ອງໄດ້ກວດຄືນ]** ໂຄງການໄດ້ພັດທະນາເຄື່ອງມືຄຸ້ມຄອງທາງດ້ານການເງິນເພື່ອກວດກາສະຖານະພາບທາງດ້ານການເງິນໃນແຕ່ລະແຂວງ. ກະຊວງຜທ ແລະໂຄງການ PCAP2 ກຳລັງສັງລວມຜົນຂອງການຍື່ນສະເໜີຂໍງົບປະມານປະຈຳປີ 2010/11ຢູ່. |
| ກະຊວງ ຜທ ແລະບັນດາຂະແໜງການກະຊວງໄດ້ພັດທະນາແຜນງານຂອງແຕ່ລະຂະແໜງການເຊິ່ງມີຄາດໝາຍປະຈຳປີສະເພາະ ແລະ ຄາດໝາຍຂອງເຂດແຄ້ວນ ແລະ ຍັງໄດ້ພັດທະນາການແຈກຢາຍໂຄງການລົງທຶນພາຍໃນແລະໂຄງການ ODA | [ບັນລຸເຄິ່ງໜຶ່ງ] ໂຄງການໄດ້ພັດທະນາການຄຸ້ມຄອງແຜນການສຳລັບການຄັດເລືອກໂຄງການລົງທຶນລັດທີ່ເໝາະສົມໃນລະດັບແຂວງ.ບັນດາພະແນກການຂັ້ນແຂວງແມ່ນໄດ້ເລີ່ມຕົ້ນນຳໃຊ້ເຄື່ອງມືການຄຸ້ມຄອງແຜນງານໃຫ້ເປັນມາດຕະຖານໃນການປະເມີນແບບປຽບທຽບສຳລັບໂຄງການລົງທຶນລັດ.ແນວທາງດັ່ງກ່າວນີ້ຕ້ອງໄດ້ຖືກນຳໃຊ້ໃນຂັ້ນຕອນການຍື່ນສະເໜີຂໍງົບປະມານສຳລັບສົກປີ 2011/12 |

## 4. ຜົນກະທົບ.

ການບັນລຸເປົ້າໝາຍລວມ ຕົວຢ່າງ ”ບັນດາຂະແໜງການກະຊວງແລະແຂວງຈັດຕັ້ງປະຕິບັດໂຄງການລົງທຶນລັດໃຫ້ໄດ້ຕາມຕາຕະລາງເວລາຢ່າງມີປະສິດຕິພາບແລະມີປະສິດຕິຜົນແລະສອດຄ່ອງກັບງົບປະມານພາຍໃຕ້ການຍົກລະດັບແຜນງານ ເຊິ່ງຖືກສະໜັບສະໜູນໂດຍບັນດາໂຕຊີ້ວັດລຸ່ມນີ້ເຊິ່ງຍາກໃນການກຳນົດເຖິງຄວາມຄືບໜ້າຂອງການບັນລຸຜົນໃນຕອນນີ້. ແນວໃດກໍ່ຕາມນັບຕັ້ງແຕ່ໂຄງການເລີ່ມຕົ້ນປະຕິບັດກິດຈະກຳ ເພື່ອປັບປຸງດຳເນີນໂຄງການລົງທຶນລັດ

ແມ່ນພາກສ່ວນໜຶ່ງຂອງອົງປະກອບ ຂອງການປັບປຸງຄຸນນະພາບ ຂອງການປະເມີນເຊິ່ງມັນມີຄວາມຄືບໜ້າໄປໃນທາງບວກຕໍ່ການບັນລຸຜົນ.

ຕາຕະລາງ 14: ໂຕຊີ້ວັດຂອງເປົ້າໝາຍລວມ

| ໂຕຊີ້ວັດ |
|---|
| **ເພີ່ມ**ຈຳນວນແລະອັດຕາສ່ວນໂຄງການລົງທຶນພາຍໃນແລະໂຄງການ ODA **ທີ່ສຳເລັດຕາມແຜນເບື້ອງຕົ້ນ.** |
| **ເພີ່ມ:** ຈຳນວນອັດຕາສ່ວນໂຄງການລົງທຶນພາຍໃນແລະໂຄງການ ODA **ທີ່ຖືກບຳລຸງຮັກສາຫຼັງຈາກໂຄງການສຳເລັດ.** |
| **ເພີ່ມ** ຈຳນວນແລະອັດຕາສ່ວນຂອງໂຄງການລົງທຶນພາຍໃນ ແລະ ODA **ທີ່ຖືກນຳໃຊ້ແລະດຳເນີນງານຕາມແຜນເບື້ອງຕົ້ນ.** |
| ຢູ່ໃນແຂວງ ແລະ ກະຊວງ,ໂຕຊີ້ວັດແມ່ນຖືກນຳໃຊ້ເປັນມາດຖານໃນການຄັດເລືອກໂຄງການ |

## 5. ຂໍ້ຄົງຄ້າງ

ກິດຈະກຳການຝຶກອົບຮົມຢູ່ປະເທດທີ 3 ທີ່ໄດ້ວາງແຜນໄວ້ແມ່ນບໍ່ໄດ້ຖືກຈັດຕັ້ງປະຕິບັດໃນປີນີ້. ທາງໂຄງການມີແຜນທີ່ຈະໄປຈັດຝຶກອົບຮົມຢູ່ປະເທດມາເລເຊັຍເຊິ່ງມີສະຖາບັນການປົກຄອງແຫ່ງຊາດ(INTAN)ເປັນເຈົ້າພາບຮ່ວມກັບໂຄງການຮ່ວມສາກົນທາງດ້ານເຕັກນິກໄຈກາ (JICA) ຢູ່ປະເທດມາລາວີ ເຊິ່ງມີຊື່ວ່າ ” ໂຄງການເສີມສ້າງຄວາມສາມາດໃນການວາງແຜນການຄຸ້ມຄອງການລົງທຶນໃນຂະແໜງການລັດ(PSIP) ໃນເບື້ອງຕົ້ນເຫັນດີທີ່ຈະຈັດຝຶກອົບຮົມ ຂຶ້ນໃນເດືອນ ພຶດສະພາ 2010 ແຕ່ເນື່ອງຈາກການຈັດຕາຕະລາງບໍ່ກົງກັນ. INTAN ຂໍເລື່ອນການຝຶກອົບຮົມໄປເດືອນກັນຍາ 2010 ເຊິ່ງເດືອນກັນຍາເປັນເດືອນທີ່ໂຄງການ PCAP2 ບໍ່ສາ ມາດຈັດກິດຈະກຳໃດໆໄດ້, ດັ່ງນັ້ນໂຄງການ PCAP2 ຈຶ່ງໄດ້ຍົກເລີກການເຂົ້າຮ່ວມຝຶກອົບຮົມໃນຄັ້ງນີ້.

## 6. ຂໍ້ມູນການເດີນທາງຂອງຊ່ຽວຊານ ໄຈກາ

ປັບປຸງວັນທີ: 8/15/2010

### ຕາຕະລາງຂອງຊ່ຽວຊານປະຈຳໂຄງການ PCAP2 (ປີທີ 3)

| ຕໍາແໜ່ງ | ຊື່ | ປີທີ 3 | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | 2009 | | | 2010 | | | | | | | | ໄຈກາ M/M |
| | | 10 | 11 | 12 | 01 | 02 | 03 | 04 | 05 | 06 | 07 | 08 | |
| ຫົວໜ້າທີ່ປຶກສາ | ທ່ານ ອີຊີໂຣ ໂອກູມູລະ | (10/19-1/21) | | 95 | | | (3/20-6/22) | | 95 | (6/23-30) (8) | | (8/1-30) 30 | 7.33 |
| ການຄຸ້ມຄອງແຜນງານ | ທ່ານ ຫິໂຣມິ ໂອຊາດະ | | (11/16-1/14) | 60 | | | | | (5/23-6/21) 30 | (6/22-24) (3) | | | 3.00 |
| ການຄຸ້ມຄອງການເງິນ/ການວາງແຜນງົບປະມານ | ທ່ານ ອາຈິຊິ ໂທກູລະ | | (11/24-12/8) 15 | | | | | | (5/29-6/12) 15 | | | | 1.00 |
| ການຄຸ້ມຄອງການເງິນ/ການບໍລິຫານງົບປະມານ | ທ່ານ ທີໂລຟູມິ ອາເຊຕະ | | (11/29-12/5) SOE | 7 | (1/4-1/30) 27 | | (3/21-3/24) SOE 4 | | (5/29-6/19) 22 | | | | 2.00 |
| ການປະເມີນຜົນຂອງການປະເມີນ/ການພັດທະນາຝຶກອົບຮົມ | ທ່ານ ໂທໂມເອ ໄທລ້າ | | (11/8-2/5) | 90 | | | | | (5/6-6/20) 46 | | (7/3-8/25) | 54 | 6.33 |
| ຜູ້ປະສານງານໂຄງການ | ທ່ານ ຄາສົມິ ນາກາມູລະ/ທ່ານ ມານະ ອິຊິກາກິ | | (11/9-11/23) 15 | (11/24-12/26) (33) | (1/7-1/21) 15 | (1/22-4/4) (73) | | | | | | (8/1-30) 30 | (2.00) |

ຮັບຜິດຊອບເອງ　ຮັບຜິດຊອບໂດຍIC Net　ມີວຽກກັບໂຄງການJICA ອື່ນ

| ລວມ M/M | 19.66 |
|---|---|

## 7. ອຸປະກອນທີ່ຊື້ມາໃຊ້ໃນໂຄງການ

ຂ້າງລຸ່ມນີ້ແມ່ນບັນຊີລາຍການອຸປະກອນທີ່ຊື້ມາໃຊ້ໃນໂຄງການ.

| **ຊື່ອຸປະກອນ** | **ຈຸດປະສົງ** |
|---|---|
| ອາດອບ ອາໂຄຣບັດ 9.0 | ເພື່ອເລີ່ມສ້າງຄວາມມີປະສິດຕິພາບໃນການເກັບເອກະສານ |
| ໄມໂຄຣຊອບ ພັບບຣິດເຊີ | ເພື່ອຜະລິດຈົດໝາຍຂ່າວແລະເອກະສານອື່ນຂອງໂຄງການ |